# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລານລະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ພຶດສະພາ 2024
ປີທີ 13
ສະບັບທີ 968
ລາຍສັບປະດາ


## ຄະນະຜູ້ແທນ ສສຊ ເພດຍິງ ແຫ່ງ ສສ.ຫວຽດນາມ ຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ



(ສພຊ) - ໃນລະຫວ່າງວັນທີ 24-27 ເມສາ 2024 ຄະນະຜູ້ແທນສະມາຊິກສະພາແຫ່ງຊາດ (ສສຊ) ເພດຍິງ ແຫ່ງ ສສ.ຫວຽດນາມ ນຳໂດຍສະຫາຍ ນາງ ຫງວຽນ ຖຸຍ ແອັງ (Nguyễn Thúy Anh) ກຳມະການສູນກາງພັກກອມມູນິດຫວຽດນາມ, ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການສັງຄົມ, ປະທານຄະນະສະມາຊິກສະພາແຫ່ງຊາດເພດຍິງ ໄດ້ມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ຕາມຄຳເຊີນຂອງຄະນະສະມາຊິກສະພາແຫ່ງຊາດ ເພດຍິງ ສປປລາວ; ການມາຢ້ຽມຢາມ ແລະເຮັດວຽກຂອງຄະນະໃນຄັ້ງນີ້ເປັນການເສີມຂະຫຍາຍສາຍພົວພັນມິດ ຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານລະຫວ່າງ ສສຊ ເພດຍິງຂອງສອງປະເທດ ໃຫ້ເຂົ້າສູ່ລວງເລິກ, ເຕີບໃຫຍ່ຂະຫຍາຍຕົວ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

ວັນທີ 24 ເມສາ 2024 ຄະນະສະມາຊິກສະພາແຫ່ງຊາດເພດຍິງ ສປປລາວ ແລະ ຄະນະ

ອ່ານຕໍ່ໜ້າ 3




## ຮອງປະທານ ສພຊ ຕິດຕາມກວດກາວຽກງານໂຄສະນາເຜີຍແຜ່ລັດຖະທຳມະນູນ ແລະ ກົດໝາຍ ຢູ່ອັດຕະປື




(ສພຊ)-ທ່ານສຈ.ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ, ປະທານກຳມາທິການກົດໝາຍພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານໂຄສະນາເຜີຍແຜ່ລັດຖະທຳມະນູນ ແລະ ກົດໝາຍທີ່ແຂວງອັດຕະປື ໂດຍໄດ້ຈັດ

ອ່ານຕໍ່ໜ້າ 7

## ຖອດຖອນບົດຮຽນການດຳເນີນກອງປະຊຸມສະໄໝສາມັນຂອງ ສພຂ




ອ່ານຕໍ່ໜ້າ 4

## ສ້າງຄວາມເຂັ້ມແຂງໃຫ້ພະນັກງານ ກວທສ ແລະ ຄະນະກຳມະການ ສພຂ



(ສພຊ) - ກອງປະຊຸມສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ-ລັດຖະກອນຂອງກຳມາທິການວັດທະນະທຳ-ສັງຄົມ (ກວທສ) ແລະ ຄະນະກຳມະການວັດທະນະທຳ-ສັງຄົມແລະບັນດາເຜົ່າຂອງສະພາປະຊາຊົນຂັ້ນແຂວງ (ສພຂ) ໄດ້ຈັດຂຶ້ນໃນລະຫວ່າງວັນທີ 28-30 ເມສາ 2024 ພາຍໃຕ້ການເປັນປະທານຂອງທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ, ໂດຍການ

ອ່ານຕໍ່ໜ້າ 3

## ການຈັດຕັ້ງປະຕິບັດບົດແນະນຳຂອງອາຊຽນ ສຳລັບການລົງທຶນຢ່າງມີຄວາມຮັບຜິດຊອບ

(ສພຊ) - ໃນລະຫວ່າງວັນທີ 24-25 ເມສາ 2024 ທີ່ນະຄອນຫຼວງວຽງຈັນ, ສະພາແຫ່ງຊາດແຫ່ງສປປລາວຮ່ວມກັບອົງການອາຫານ ແລະ ກະສິກຳ (FAO), ກອງເລຂາໄອປາ ແລະ ສະຖາບັນການພັດທະນາແບບຍືນຍົງສາກົນ (IISD) ໄດ້ຈັດກອງປະຊຸມສຳມະນາກ່ຽວກັບການຈັດຕັ້ງປະຕິບັດບົດແນະນຳຂອງອາຊຽນສຳລັບການລົງທຶນຢ່າງມີຄວາມຮັບຜິດຊອບໃນດ້ານສະບຽງອາຫານ, ກະສິກຳ ແລະ ປ່າໄມ້ (ASEAN-RAI) ຄັ້ງທີ 1 ໂດຍມີຄະນະຜູ້ແທນຈາກສະມາຊິກສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ເຊັ່ນ: ຫວຽດນາມ, ກຳປູເຈຍ, ບຣູໄນ ດາຣຸດສະລາມ, ມາເລເຊຍ ແລະ ຄະນະຜູ້ແທນສະພາແຫ່ງຊາດລາວ; ນອກນັ້ນ, ຍັງມີຄະນະຜູ້ແທນຈາກລັດຖະສະພາຕີມໍເລັດເຕ, ກອງເລຂາໄອປາ, ກອງເລຂາອາຊຽນ, ອົງການອາຫານ ແລະກະສິກຳ, ຕາງໜ້າກະຊວງກະສິກຳ ແລະ ປ່າໄມ້ ຂອງ ສປປລາວ ລວມທັງໝົດ 34 ທ່ານ ເຂົ້າຮ່ວມ.



ກອງປະຊຸມສຳມະນາຄັ້ງນີ້, ໄດ້ຮັບກຽດເຂົ້າຮ່ວມ ແລະ ກ່າວເປີດກອງປະຊຸມໂດຍທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດລາວ ໃນນາມ

ອ່ານຕໍ່ໜ້າ 4



ບັນຫາແກ້ຍາກ... (ໜ້າ 8)



ຄຸນປະໂຫຍດ... (ໜ້າ 9)



ລັດຖະສະພາ... (ໜ້າ 10)



ແບບຢ່າງທີ່ດີ... (ໜ້າ 12)

**ຊົມເຊີຍວັນກຳມະກອນສາກົນ ຄົບຮອບ 138 ປີ (01 ພຶດສະພາ 1886 - 01 ພຶດສະພາ 2024) ຢ່າງສຸດໃຈ!**

# ນັກສຶກສາທິດສະດີການເມືອງຂັ້ນຕົ້ນ ຂອງ ສພຊ ທັດສະນະສຶກສາຢູ່ຫຼວງພະບາງ




(ສພຊ) - ລະຫວ່າງວັນທີ 22-24 ເມສາ 2024 ຄະນະນຳ, ຄູ-ອາຈານ ແລະ ນັກສຶກສາທິດສະດີການເມືອງຂັ້ນຕົ້ນ ຊຸດທີ II ຂອງສະພາແຫ່ງຊາດ (ສພຊ) ໄດ້ທັດສະນະສຶກສາຢູ່ແຂວງຫຼວງພະບາງ ໂດຍການນຳພາຂອງສະຫາຍ ສິງຄຳ ວົງພະຈັນ ຄະນະບໍລິຫານງານພັກສະພາແຫ່ງຊາດ, ຮອງເລຂາຄະນະພັກຮາກຖານຄະນະເລຂາທິການ, ຫົວໜ້າຄະນະຮັບຜິດຊອບນຳພານັກສຶກສາທິດສະດີການເມືອງຂັ້ນຕົ້ນຂອງ ສພຊ ເຊິ່ງໄດ້ຢ້ຽມຢາມ, ພົບປະແລກປ່ຽນບົດຮຽນຢູ່ໂຮງຮຽນການເມືອງແລະການປົກຄອງແຂວງ ໂດຍໄດ້ຮັບການຕ້ອນຮັບຈາກສະຫາຍ ພູທອນ ຫຼວງວິໄລ ຫົວໜ້າໂຮງຮຽນ ພ້ອມດ້ວຍຄະນະນຳ, ພະນັກງານ ຄູ-ອາຈານ ຕະຫຼອດຮອດນັກສຶກສາທິດສະດີຂັ້ນຕົ້ນຂອງໂຮງຮຽນດັ່ງກ່າວ.

ສະຫາຍ ພູທອນ ຫຼວງວິໄລ ໄດ້ລາຍງານສະພາບຂອງໂຮງຮຽນໂດຍຫຍໍ້ວ່າ: ປີ 1998 ຄະນະປະຈຳພັກແຂວງຫຼວງພະບາງ ໄດ້ຕົກລົງສ້າງຕັ້ງສູນເຝິກອົບຮົມການເມືອງແຂວງ ເຊິ່ງການຊີ້ນຳ-ນຳພາແມ່ນຂຶ້ນກັບຄະນະໂຄສະນາ-ອົບ ຮົມແຂວງ, ມີສຳນັກງານທີ່ຕັ້ງຢູ່ບ້ານມ້າ ຫຼືເຂດນາດູ່ ນະຄອນຫຼວງພະບາງ ເພື່ອເຮັດໜ້າທີ່ຕົ້ນຕໍກ່ຽວກັບການເຝິກອົບຮົມທິດສະດີມາກ-ເລນິນ, ແນວທາງຂອງພັກ ລະບົບ 45 ວັນ ໃຫ້ແກ່ພະນັກງານ, ສະມາຊິກພັກ ແລະ ກຳລັງປະກອບອາວຸດ; ມາຮອດວັນທີ27 ຕຸລາ 2001 ໄດ້ປ່ຽນຊື່ມາເປັນໂຮງຮຽນການເມືອງ ແລະ ການປົກຄອງແຂວງ, ມາຮອດວັນທີ 21 ກໍລະກົດ 2003 ກົມການເມືອງສູນກາງພັກ ໄດ້ອອກມະຕິຕົກລົງວ່າດ້ວຍການໂອນຄວາມຮັບຜິດຊອບການຊີ້ນຳ-ນຳພາດ້ານວິຊາການຂອງບັນດາໂຮງຮຽນການເມືອງ-ການປົກຄອງທ້ອງຖິ່ນທົ່ວປະເທດ (ໃນເມື່ອກ່ອນແມ່ນຂຶ້ນກັບການຊີ້ນຳ-ນຳພາຂອງຄະນະໂຄສະນາ-ອົບຮົມສູນກາງພັກ) ໃຫ້ມາຂຶ້ນກັບສະຖາບັນການເມືອງ-ການປົກຄອງແຫ່ງຊາດ ເຊິ່ງໜ້າທີ່ການເມືອງຂອງໂຮງຮຽນການເມືອງ ແລະ ການປົກຄອງແຂວງຫຼວງພະບາງໃນໄລຍະນີ້ ແມ່ນສຸມໃສ່ສ້າງລະບົບບຳລຸງ-ກໍ່ສ້າງພະນັກງານນຳພາ-ຄຸ້ມຄອງທັງລະບົບຊັ້ນກາງ ແລະ ຊັ້ນສູງ ຢ່າງເປັນລະບົບ, ເອົາການຄົ້ນຄວ້າທິດສະດີ ແລະ ສະຫຼຸບພຶດຕິກຳຕິດພັນກັບການຮຽນ-ການສອນເທື່ອລະກ້າວ. ພາຍໃຕ້ການນຳພາ-ຊີ້ນຳອັນຖືກຕ້ອງແລະໃກ້ຊິດຕິດແທດຂອງຄະນະປະຈຳພັກແຂວງ ແລະ ສະຖາບັນການເມືອງ-ການປົກຄອງແຫ່ງຊາດ ບວກໃສ່ການນຳພາໂດຍກົງຂອງກຳມະ ການພັກແຂວງ, ອະດີດຫົວໜ້າໂຮງຮຽນການເມືອງ ແລະ ການປົກຄອງແຂວງ, ປັດຈຸບັນ ພວມດຳເນີນການຮຽນການສອນຫຼັກສູດເຝິກອົບຮົມຄະນະພັກບ້ານ-ນາຍບ້ານລະບົບ 10 ວັນ, ຫຼັກສູດຂັ້ນຕົ້ນ 3 ເດືອນ ແລະ ຂັ້ນກາງ 6 ເດືອນ ອັນໄດ້ເຮັດໃຫ້ວຽກງານແຕ່ລະດ້ານໄດ້ຮັບການປັບປຸງປະກອບສ່ວນສຳຄັນໃຫ້ແກ່ການຍົກລະດັບທິດສະດີການເມືອງ-ການປົກຄອງໃຫ້ແກ່ພະນັກງານ-ລັດຖະກອນ, ນາຍທະຫານ-ຕຳຫຼວດຢູ່ຂັ້ນແຂວງ, ເມືອງ ແລະ ບ້ານ ຢ່າງມີຄຸນນະພາບສູງຂຶ້ນເລື້ອຍໆ ຕາມແຕ່ລະຫຼັກສູດດ້ວຍຫຼາຍຮູບການ, ວິທີການ ແລະ ມີໄລຍະເວລາແຕກຕ່າງກັນ ທັງມີເນື້ອໃນຫຼາຍຮູບຫຼາຍສີ ເໝາະສົມກັບໜ້າທີ່ການເມືອງໃນໄລຍະໃໝ່.

ໂອກາດນີ້, ຄະນະນັກສຶກສາທິດສະດີການເມືອງຂັ້ນຕົ້ນ ຊຸດທີ II ຂອງ ສພຊ ໄດ້ມອບອຸປະກອນກິລາຈຳນວນໜຶ່ງ ແລະ ຮ່ວມແຂ່ງຂັນກິລາບານເຕະຊາຍ, ບານສົ່ງຍິງ ແລະ ເປຕັງ ເພື່ອເປັນການສ້າງຄວາມສາມັກຄີລະຫວ່າງຄູ-ອາຈານ, ນັກສຶກສາທິດສະດີການເມືອງຂັ້ນຕົ້ນຂອງທັງສອງພາກສ່ວນ. ນອກນັ້ນ, ຍັງໄດ້ພົບປະແລກປ່ຽນບົດຮຽນຢູ່ຫ້ອງວ່າການປົກຄອງແຂວງ ພ້ອມທັງຮັບຟັງການລາຍງານໂດຍຫຍໍ້ສະພາບເສດຖະກິດ-ສັງຄົມ, ທ່າແຮງ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກໃນການພັດທະນາແຂວງ; ພົບປະແລກປ່ຽນບົດຮຽນຢູ່ບ້ານເມືອງຂາຍ (ບ້ານ 3 ສ້າງ) ພ້ອມທັງຮັບຟັງການລາຍງານໂດຍຫຍໍ້ສະພາບການດຳລົງຊີວິດຂອງປະຊາຊົນ, ຂໍ້ສະດວກແລະຂໍ້ຫຍຸ້ງຍາກໃນການເຮັດວຽກງານ 3 ສ້າງ ແລະ ໄດ້ມອບອຸປະກອນກິລາຈຳນວນໜຶ່ງ; ຢ້ຽມຊົມການຜະລິດກະສິກຳບ້ານນາຊາວ ພ້ອມທັງຮັບຟັງການລາຍງານໂດຍຫຍໍ້ສະພາບການຜະລິດກະສິກຳ; ພົບປະແລກປ່ຽນບົດຮຽນຢູ່ວິທະຍາໄລກະສິກຳປາກເຊືອງ ແລະ ໄດ້ມອບອຸປະກອນກິລາຈຳນວນໜຶ່ງ; ພ້ອມນັ້ນ, ຄະນະຍັງໄດ້ຢ້ຽມຢາມສະຖານທີ່ທ່ອງທ່ຽວວັດທະນະທຳຈຳນວນໜຶ່ງຂອງແຂວງອີກດ້ວຍ.

**(ກົງທະນູຄຳ ພິພັດເສລີ)**

# ເຝິກການນຳໃຊ້ລະບົບເຄືອຂ່າຍພາຍໃນ



(ສພຊ) - ກອງປະຊຸມເຝິກອົບຮົມການເປັນຄູເຝິກການນຳໃຊ້ລະບົບເຄືອຂ່າຍພາຍໃນຂອງສະພາແຫ່ງຊາດ (ສພຊ) ໃຫ້ແກ່ພະນັກງານສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ (ສພຂ) 5 ແຂວງຄື: ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື ໄດ້ຈັດຂຶ້ນທີ່ເມືອງໂຂງ ແຂວງຈຳປາສັກ ໃນລະຫວ່າງວັນທີ 29-30 ເມສາ 2024 ພາຍໃຕ້ການເປັນປະທານຂອງທ່ານ ສິນທະລາ ຫຼ້າສຸກສະໄໝ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ; ມີທ່ານ ຄຳແທ່ນ ວິລະກຸນ ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ, ບັນດາທ່ານເລຂາທິການ-ຮອງເລຂາທິການ ສພຂ, ຫົວໜ້າ-ຮອງຫົວໜ້າສູນ, ຄະນະພະແນກ ແລະ ລັດຖະກອນວິຊາການພາຍໃນສະຖາບັນດັ່ງກ່າວ ພ້ອມດ້ວຍສຳມະນາກອນຈາກບັນດາກົມພາຍໃນ ສພຊ ແລະ ສພຂ 5 ແຂວງ ເຂົ້າຮ່ວມ.

ທັງນີ້, ກໍເພື່ອຈັດຕັ້ງຜັນຂະຫຍາຍແຜນພັດທະນາການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ), ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ແລະ ພະນັກງານທີ່ເປັນເສນາທິການ ໄລຍະ 5 ປີ (2021-2025) ໃຫ້ເປັນຮູບປະທຳໃນວຽກງານຕົວຈິງ; ເພື່ອປັບປຸງການສະໜອງຂໍ້ມູນ-ຂ່າວສານຜ່ານລະບົບເຄືອຂ່າຍພາຍໃນຮັບໃຊ້ໃຫ້ແກ່ການຄົ້ນຄວ້າ, ຕົກລົງບັນຫາຕ່າງໆຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາທັງຢູ່ສູນກາງແລະທ້ອງຖິ່ນໃນຂອບເຂດທົ່ວປະເທດ; ເພື່ອເຝິກອົບຮົມວິທີນຳໃຊ້ລະບົບເຄືອຂ່າຍພາຍໃນໃຫ້ແກ່ພະນັກງານ ໃຫ້ກາຍເປັນຄູເຝິກທີ່ສາມາດເຜີຍແຜ່, ແນະນຳວິທີນຳໃຊ້ລະບົບເຄືອຂ່າຍພາຍໃນໃຫ້ແກ່ເປົ້າໝາຍຕ່າງໆຂອງການຈັດຕັ້ງ, ທ້ອງຖິ່ນຂອງຕົນທັງປະກອບສ່ວນປັບປຸງເນື້ອໃນ ແລະ ບຳລຸງຮັກສາລະບົບເຄືອຂ່າຍພາຍໃນໄດ້ເປັນຢ່າງດີ.

ກອງປະຊຸມໄດ້ຮັບຟັງການສະເໜີວິທີການສະໝັກການນຳໃຊ້ລະບົບເຄືອຂ່າຍພາຍໃນສະພາແຫ່ງຊາດ, ການເຂົ້າເຖິງ

ອ່ານຕໍ່ໜ້າ 3

# ເລື່ອງ ເດັ່ນ ຂ່າວ ເດັດ

*# ຄັດໂດຍ: ທອມສະນິດ*

❐ *ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສແມ່ນການສຳຫຼວດໃຫຍ່ລະດັບຊາດ ທີ່ມີຄວາມສຳຄັນທີ່ສຸດເພາະເປັນການເກັບກຳ ແລະ ຈົດນັບພົນລະເມືອງ ເພື່ອຕິດຕາມສະພາບການຂະຫຍາຍຕົວ ແລະ ປັດໄຈ ທີ່ມີຜົນກະທົບຕໍ່ກັບການຂະຫຍາຍຕົວຂອງພົນລະເມືອງໃນທຸກໆ 10 ປີ ໂດຍອີງໃສ່ກົດໝາຍວ່າດ້ວຍສະຖິຕິ ແລະ ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025 ແລະ ວິໄສທັດ ຮອດປີ 2030 ກໍຄື ປະຕິບັດຕາມພັນທະຕໍ່ສາກົນໃນເງື່ອນໄຂທີ່ ສປປລາວ ເປີດກວ້າງການພົວພັນຮ່ວມມືໃນຂົງເຂດ, ພາກພື້ນ ແລະ ສາກົນ. ພ້ອມນີ້, ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຈະເປັນແຫຼ່ງຂໍ້ມູນໜຶ່ງດຽວທີ່ສຳຄັນໃນການປັບປຸງຖານຂໍ້ມູນພົນລະເມືອງແຫ່ງຊາດ ຂອງ ສປປ ລາວ ຕະຫຼອດໄລຍະ 10 ປີຜ່ານມາ ເຊິ່ງເປັນຖານຂໍ້ມູນທີ່ຈະປະກອບດ້ວຍຂໍ້ມູນຄຸນລັກສະນະດ້ານພົນລະເມືອງ, ການສຶກສາ, ກວດກາທາງດ້ານເສດຖະກິດ, ແຮງງານ, ອາຊີບ, ສຸຂະພາບຈະເລີນພັນ, ການເສຍຊີວິດ, ການຍົກຍ້າຍ ແລະ ຄຸນລັກສະນະທີ່ຢູ່ອາໄສ.*

***ໜສພ. ປະເທດລາວ 23/04/2024***

❐ *ສູນກາງສະຫະພັນກຳມະບານລາວ ກຽມສະເຫຼີມສະຫຼອງວັນກຳມະກອນສາກົນ ຄົບຮອບ 138 ປີ ດ້ວຍຫຼາຍຮູບແບບ ເປັນຕົ້ນ: ຈັດຕັ້ງປາຖະກະຖາຫວນຄືນມູນເຊື້ອປະຫວັດຄວາມເປັນມາຂອງວັນກຳມະກອນສາກົນ ຕາມເງື່ອນໄຂ ແລະ ຄວາມເໝາະສົມຕົວຈິງ; ຈັດກິດຈະກຳຖາມ-ຕອບຄວາມຮູ້ກ່ຽວກັບວັນກຳມະກອນສາກົນ; ສ້າງເງື່ອນໄຂໃຫ້ຄະນະປະທານ, ຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ, ຄະນະພັກຄະນະນຳຂັ້ນແຂວງ ຮ່ວມກັບ ຄະນະປະທານຄະນະບໍລິຫານງານສະຫະພັນກຳມະບານແຂວງ ລົງພົບປະຢ້ຽມຢາມກຳມະກອນຢູ່ຕາມຫົວໜ່ວຍແຮງງານໂຮງຈັກ-ໂຮງງານໃນທົ່ວປະເທດຕາມຄວາມສາມາດຕົວຈິງ; ຈັດຂະບວນການບໍລິຈາກເລືອດ ເພື່ອຊ່ວຍເຫຼືອສັງຄົມ; ຈັດຂະບວນການແຂ່ງຂັນກິລາ, ສິລະປະວັນນະຄະດີ, ຂະບວນການອອກແຮງງານລວມ ແລະ ກິດຈະກຳແຂ່ງຂັນສີມືແຮງງານຕາມເງື່ອນໄຂຕົວຈິງຂອງແຕ່ລະພາກສ່ວນ.*

***ໜສພ. ປະເທດລາວ 23/04/2024***

❐ *ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ V ປີ 2025 ທີ່ຈະມາເຖິງນີ້, ລັດຖະບານ ກໍຄືກະຊວງແຜນການ ແລະ ການລົງທຶນ ແລະ ບັນດາກະຊວງ, ອົງການ, ແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ ໄດ້ກຽມຄວາມພ້ອມຮອບດ້ານ ເພື່ອກຽມໃຫ້ແກ່ການສຳຫຼວດໃນຄັ້ງນີ້ ເຊິ່ງຄາດຄະເນວ່າຈະນຳໃຊ້ງົບປະມານເຂົ້າໃນການສຳຫຼວດທັງໝົດ 22,2 ລ້ານໂດລາສະຫະລັດ ເຊິ່ງຈະໄດ້ນຳໃຊ້ເຂົ້າໃນຫຼາຍກິດຈະກຳ ເປັນຕົ້ນ: ການກະກຽມການສຳຫຼວດ, ການເກັບກຳຂໍ້ມູນພາກສະໜາມ, ການກວດແກ້ ແລະ ປຸງແຕ່ງຂໍ້ມູນ ແລະ ການເຜີຍແຜ່ການສຳຫຼວດ. ສຳລັບບຸກຄະລາກອນໃນການເດີນສຳຫຼວດພາກສະໜາມທີ່ມີປະສົບການຕ້ອງການທັງໝົດປະມານ 18.000 ກວ່າຄົນ ເຊິ່ງຈະໄດ້ສືບຕໍ່ກະກຽມໃນການປະສານສົມທົບກັບບັນດາຄະນະຊີ້ນຳຂັ້ນແຂວງ ແລະ ຫ້ອງການສຳຫຼວດຂັ້ນແຂວງ ໃນການຈັດຫາບຸກຄະລະກອນໃຫ້ຖືກຕາມມາດຖານຂອງການສຳຫຼວດ.*

***ໜສພ. ປະຊາຊົນ 24/04/2024***

❐ *ລັດຖະບານ ກໍຄື ກະຊວງສາທາລະນະສຸກ ຈະເລີ່ມເປີດຂະບວນການສັກວັກຊີນກັນພະຍາດໝາກແດງໃຫຍ່ ແລະ ໝາກແດງນ້ອຍ ໂດຍບໍ່ເສຍຄ່າແຕ່ວັນທີ 20-30 ພຶດສະພາ 2024 ທີ່ສຸກສາລາຕ່າງໆ, ບັນດາໂຮງໝໍເມືອງ, ໂຮງໝໍແຂວງ ແລະ ຕາມສະຖານທີ່ຕ່າງໆ ທີ່ໄດ້ກຳນົດ ໂດຍໄດ້ຮັບການສະໜັບສະໜູນຈາກອົງການກາວີ (Gavi), ລັດຖະບານອົດສະຕຣາລີ, ອົງການອຸຍນີເຊັບແລະອົງການອະນາໄມໂລກ.*

***ໜສພ. ປະເທດລາວ 26/04/2024***



## ຄະນະ...

(ຕໍ່ຈາກໜ້າ 1)

ສະມາຊິກສະພາແຫ່ງຊາດເພດຍິງ ສສ.ຫວຽດນາມ ໄດ້ມີການພົບປະສອງຝ່າຍ ເຊິ່ງໄດ້ພ້ອມກັນຕີລາຄາຄືນການພົວພັນຮ່ວມມືລະຫວ່າງສອງຄະນະ ສສຊ ເພດຍິງ ໃນໄລຍະຜ່ານມາ ແລະ ເປັນເອກະພາບກັນກ່ຽວກັບທິດທາງການພົວພັນຮ່ວມມືກັນໃນຕໍ່ໜ້າ.

ວັນທີ 25 ເມສາ 2024 ຄະນະ ສສຊ ເພດຍິງ ລາວ ແລະ ຫວຽດນາມ ໄດ້ຮ່ວມກັນຈັດກອງປະຊຸມສຳມະນາພາຍໃຕ້ຫົວຂໍ້: ບົດຮຽນຂອງ ສສ.ຫວຽດນາມໃນການເພີ່ມທະວີບົດບາດຂອງເພດຍິງໃນເວທີການເມືອງ, ໂດຍການເປັນປະທານຮ່ວມຂອງສະຫາຍ ນາງ ທຸມມາລີ ວົງພະຈັນ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວັດທະນະທຳ-ສັງຄົມ, ປະທານຄະນະ ສສຊ ເພດຍິງ ແລະ ສະຫາຍ ນາງ ຫງວຽນ ຖຸຍ ແອັງ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການສັງຄົມ, ປະທານຄະນະ ສສຊ ເພດຍິງ; ມີບັນດາສະມາຊິກສະພາແຫ່ງຊາດເພດຍິງທັງສອງປະເທດ, ປະທານກຳມາທິການ, ຮອງປະທານກຳມາທິການ ແລະ ຕາງໜ້າຈາກກຳມາທິການພາຍໃນສະພາແຫ່ງຊາດລາວ ພ້ອມດ້ວຍແຂກຖືກເຊີນຈາກພາກສ່ວນກ່ຽວຂ້ອງຂອງແຂວງເຂົ້າຮ່ວມ.

ບັນດາຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ໄດ້ແລກປ່ຽນບົດຮຽນໃນການເພີ່ມອັດຕາສ່ວນການນຳເພດຍິງ; ບົດຮຽນໃນການເຄື່ອນໄຫວຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ ສສ.ຫວຽດນາມ ກ່ຽວກັບກົງຈັກ, ການຈັດຕັ້ງ, ງົບປະມານ, ແຜນການເຄື່ອນໄຫວ ແລະ ບົດຮຽນການເຄື່ອນໄຫວວຽກງານຂອງສສຊເພດຍິງຫວຽດນາມ; ບົດຮຽນໃນການເຊື່ອມທັດສະນະບົດບາດ ແລະ ຄວາມສະເໝີພາບ ຍິງ-ຊາຍ ເຂົ້າໃນການສ້າງ ແລະປັບປຸງກົດໝາຍຂອງ ສສ.ຫວຽດນາມ; ບົດຮຽນໃນການເຄື່ອນໄຫວວຽກງານລັດຖະສະພາສາກົນ ໂດຍສະເພາະໃນຂອບ IPU, AIPA/ WAIPA ແລະ ບັນດາກອງປະຊຸມລັດຖະສະພາສາກົນອື່ນໆ.

ໂອກາດດັ່ງກ່າວ, ສະຫາຍ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງຄະນະຜູ້ແທນສະມາຊິກສະພາແຫ່ງຊາດເພດຍິງຫວຽດນາມແລະລາວພ້ອມທັງເຂົ້າຮ່ວມແລະມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ເຊິ່ງໄດ້ເນັ້ນໜັກວ່າ: ກອງປະຊຸມພົບປະ ແລະ ແລກປ່ຽນບົດຮຽນລະຫວ່າງຄະນະສະມາຊິກສະພາແຫ່ງຊາດເພດຍິງລາວ ແລະ ຄະນະສະມາຊິກສະພາແຫ່ງຊາດເພດຍິງຫວຽດນາມ ເປັນການສືບຕໍ່ຜັນຂະຫຍາຍກົນໄກການຮ່ວມມືທີ່ມີມາຕັ້ງແຕ່ສະພາແຫ່ງຊາດຊຸດກ່ອນໜ້ານີ້ ທັງເປັນການຈັດຈັ້ງປະຕິບັດບົດບັນທຶກຊ່ວຍຈຳວ່າດ້ວຍການຮ່ວມມືລະຫວ່າງສອງສະພາແຫ່ງຊາດ ລາວ ແລະ ຫວຽດນາມ ເຊິ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບອັນຫຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ເວົ້າລວມ, ໂດຍສະເພາະແມ່ນໃນຂົງເຂດນິຕິບັນຍັດ ໃຫ້ນັບມື້ນັບຂະຫຍາຍຕົວ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ; ຕີລາຄາສູງຕໍ່ກອງປະຊຸມພົບປະແລກປ່ຽນບົດຮຽນທີ່ມີຄວາມໝາຍຄວາມສຳຄັນໃນຄັ້ງນີ້ ເຊິ່ງເປັນການຊຸກຍູ້ສົ່ງເສີມບົດບາດຂອງສະມາຊິກສະພາແຫ່ງຊາດເພດຍິງໃນອົງການນິຕິບັນຍັດ ທັງເປັນການເພີ່ມທະວີຄວາມສາມັກຄີຮັກແພງ ແລະ ການຮ່ວມມືລະຫວ່າງຄະນະສະມາຊິກສະພາແຫ່ງຊາດເພດຍິງ ສປປລາວ ແລະ ຄະນະສະມາຊິກສະພາແຫ່ງຊາດເພດຍິງ ສສ.ຫວຽດນາມ.

ໃນໄລຍະຢ້ຽມຢາມແລະເຮັດວຽກຢູ່ແຂວງຫຼວງພະບາງ, ຄະນະຜູ້ແທນ ສສຊ ເພດຍິງ ຫວຽດນາມ ຍັງໄດ້ໄປຢ້ຽມຢາມໂຮງຮຽນໂສຕະ (ໂຮງຮຽນສຶກສາຄົນພິການ), ສູນຫັດຖະກຳອອກພົກຕົບ ແລະ ແຫຼ່ງທ່ອງທ່ຽວ ພະທາດພູສີ, ວັດຊຽງທອງ, ຕາດກວາງຊີອີກດ້ວຍ.



## ສ້າງຄວາມເຂັ້ມແຂງ...

(ຕໍ່ຈາກໜ້າ 1)

ເຂົ້າຮ່ວມ ແລະ ໂອ້ລົມຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ; ມີບັນດາວິທະຍາກອນທີ່ມາຈາກສະພາແຫ່ງຊາດ ພ້ອມດ້ວຍສຳມະນາກອນທີ່ເປັນພະນັກງານ-ລັດຖະກອນຂອງ ກວທສ ແລະ ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສພຂ ໃນທົ່ວປະເທດເຂົ້າຮ່ວມ.

ຜ່ານການດຳເນີນກອງປະຊຸມເປັນເວລາ 3 ວັນ, ວິທະຍາກອນໄດ້ຖ່າຍທອດບົດຮຽນ ແລະ ປະສົບການຕົວຈິງຕ່າງໆໃຫ້ແກ່ສຳມະນາກອນ ເປັນຕົ້ນແມ່ນການສະເໜີບົດຮຽນກ່ຽວກັບການຮ່າງແຜນການຕິດຕາມກວດກາປົກກະຕິ, ຫົວຂໍ້ສະເພາະ ແລະ ບັນຫາພົ້ນເດັ່ນເຄັ່ງຮ້ອນ; ການກະກຽມບົດຄຳເຫັນໃຫ້ແກ່ການນຳ ແລະ ການສັງລວມບົດຄຳເຫັນໃຫ້ແກ່ປະທານກອງປະຊຸມ; ການປະກອບຄຳເຫັນຕໍ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະຂອງແຂວງ; ການຮ່າງແຈ້ງການເຊີນແລະຄຳແນະນຳ; ການຮ່າງຄຳຊັກຖາມ ແລະ ຄຳຖາມເຈາະຈີ້ມ; ການຮ່າງບົດສະຫຼຸບປະຈຳເດືອນ, ບົດບັນທຶກກອງປະຊຸມ ແລະ ບົດລາຍງານຜົນສຳເລັດຂອງກອງປະຊຸມ; ບົດຮຽນ ກ່ຽວກັບການຄົ້ນຄວ້າ ແລະ ການປະກອບຄຳເຫັນຕໍ່ການສ້າງແລະປັບປຸງກົດໝາຍ. ຈາກນັ້ນ, ສຳມະນາກອນໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນ ແລະ ຖອດຖອນບົດຮຽນນຳວິທະຍາກອນ ເພື່ອໃຫ້ໄດ້ຄວາມຮູ້ໃນການນຳໄປແກ້ໄຂໃນການປະຕິບັດໜ້າທີ່ຂອງຕົນ.

ທ່ານ ຄຳໃບ ດຳລັດ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມວ່າ: ກຳມາທິການວັດທະນະທຳ-ສັງຄົມ ໄດ້ຄົ້ນຄວ້າ, ປຶກສາຫາລືແລະປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອໃຫ້ສາມາດຈັດກອງປະຊຸມຄັ້ງນີ້ຂຶ້ນເພື່ອເປັນການຍົກສູງຄຸນນະພາບ ແລະ ຮັບປະກັນການເປັນເສນາທິການໃນການຈັດຕັ້ງປະຕິບັດ 3 ພາລະບົດບາດຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງ ໃຫ້ມີປະສິດທິພາບ ແລະ ໄດ້ຮັບປະສິດທິຜົນສູງຂຶ້ນ; ທັງນີ້ ກໍເພື່ອເປັນການສືບຕໍ່ກໍ່ສ້າງ ແລະ ພັດທະນາພະນັກງານ-ລັດຖະກອນ ໃຫ້ມີຄວາມຮູ້, ມີຄວາມເຂັ້ມແຂງ, ເປັນມືອາຊີບ ແລະ ມີຄຸນນະພາບດີຂຶ້ນກວ່າເກົ່າ. ໃນໂອກາດນີ້, ທ່ານໄດ້ມີບາງຄຳເຫັນເພື່ອເປັນທິດໃຫ້ບັນດາສຳມະນາກອນນຳໄປຄົ້ນຄວ້າແລະຈັດຕັ້ງປະຕິບັດໃນຕໍ່ໜ້າ ໂດຍສະເໜີໃຫ້ສຳມະນາກອນ ຈົ່ງເຊີດຊູ ແລະ ຍົກສູງຄວາມຮັບຜິດຊອບໜ້າທີ່ການເມືອງຂອງຕົນ ຕໍ່ການເປັນເສນາທິການໃນການຈັດຕັ້ງປະຕິບັດ 3 ພາລະບົດບາດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ດ້ວຍການຄົ້ນຄວ້າກຳແໜ້ນກ່ຽວກັບນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃຫ້ເລິກເຊິ່ງກວ່າເກົ່າ ເພື່ອເປັນເຄື່ອງມືແລະເປັນບ່ອນອີງໃຫ້ແກ່ການຕິດຕາມ ກວດກາວຽກງານດັ່ງກ່າວ ທັງຢູ່ສູນກາງ ແລະ ທ້ອງຖິ່ນໃນແຕ່ລະໄລຍະ; ພ້ອມນັ້ນກໍໃຫ້ເອົາໃຈໃສ່ຮຽນຮູ້ທິດສະດີ ແລະ ຮູ້ຈັດຕັ້ງປະຕິບັດຕົວຈິງ, ມີທັກສະໃນການຄົ້ນຄວ້າ ແລະ ການເຮັດວຽກທີ່ດີ. ເອົາໃຈໃສ່ນຳເອົາບັນດາເນື້ອໃນ, ບົດຮຽນຂອງການເຝິກອົບຮົມສ້າງຄວາມເຂັ້ມແຂງເທື່ອນີ້ ໄປເປັນຕົວຢ່າງ ແລະ ໝູນໃຊ້ເຂົ້າໃນການປະຕິບັດວຽກງານຕົວຈິງຕາມຂອບເຂດສິດ ແລະ ໜ້າທີ່ທີ່ໄດ້ກຳນົດໄວ້ ເພາະທຸກໆນິຕິກຳ, ທຸກໆເອກະສານ ແມ່ນມີໂຄງຮ່າງ ແລະ ເນື້ອໃນສະເພາະຂອງແຕ່ລະບັນຫາ, ຕົວຢ່າງ: ໂຄງຮ່າງເນື້ອໃນມະຕິຂອງພັກ, ມະຕິກອງປະຊຸມສະພາ, ມະຕິຄະນະປະຈຳສະພາ, ບົດບັນທຶກ, ບົດລາຍງານ, ບົດຄຳເຫັນ ເຊິ່ງແຕ່ລະເອກະສານໄດ້ມີໂຄງສ້າງ ແລະ ເນື້ອໃນສະເພາະຂອງມັນ. ເພີ່ມທະວີຄວາມເອົາໃຈໃສ່ໃນການເປັນເສນາທິການຊ່ວຍກຳມາທິການວັດທະນະທຳ-ສັງຄົມ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າຕິດຕາມບັນດາຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດແຜນຍຸດທະສາດ, ແຜນພັດທະນາຂອງຂະແໜງການ, ໂຄງການ, ແຜນງານຂອງຂະແໜງການທີ່ກ່ຽວຂ້ອງຢູ່ສູນກາງ ແລະ ທ້ອງຖິ່ນ ໃຫ້ມີຜົນສຳເລັດໃນແຕ່ລະໄລຍະ. ແຕ່ລະກຳມາທິການ, ແຕ່ລະຄະນະກຳມະການ ໄດ້ມີທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່ ແລະ ທິດທາງແຜນການເຄື່ອນໄຫວລະອຽດແຕ່ລະດ້ານ; ສະນັ້ນ, ພວກເຮົາຕ້ອງຄົ້ນຄວ້າກຳແໜ້ນແຕ່ລະບັນຫາ ເພື່ອເປັນບ່ອນອີງໃນການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ. ເພີ່ມທະວີການພົວພັນ, ປະສານສົມທົບກັນທັງພາຍໃນແລະພາຍນອກ, ລະຫວ່າງສູນກາງແລະທ້ອງຖິ່ນກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອເປັນທ່າແຮງຕໍ່ການຊຸກຍູ້ ແລະ ຕິດຕາມການປະຕິບັດວຽກງານຂອງຂະແໜງການ ໃນຂົງເຂດວັດທະນະທຳ-ສັງຄົມ ໃຫ້ມີຜົນສຳເລັດ ເພາະກຳມາທິການວັດທະນະທຳ-ສັງຄົມ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ແມ່ນພົວພັນຫຼາຍຂົງເຂດກວ້າງຂວາງ; ສະນັ້ນ, ພວກເຮົາຢາກເຮັດວຽກຕິດ ຕາມກວດກາໄດ້ ຕ້ອງມີການປະສານສົມທົບທີ່ດີ, ໂລ່ງລ່ຽນ ແລະ ທັນຕາມກຳນົດເວລາ. ຜ່ານການຈັດຕັ້ງປະຕິບັດຕົວຈິງ ຕ້ອງມີການສະຫຼຸບຖອດຖອນບົດຮຽນ, ລາຍງານ ແລະ ຂໍທິດຊີ້ນຳຈາກຂັ້ນເທິງຢ່າງເປັນປົກກະຕິ; ພ້ອມດຽວກັນນີ້, ສະເໜີໃຫ້ບັນດາທ່ານເອົາໃຈໃສ່ພັດທະນາຕົນເອງໃນທຸກດ້ານ, ຍົກລະດັບຄວາມຮູ້ໃນການຄົ້ນຄວ້າ, ວິເຄາະ-ວິໄຈ, ສະຫຼຸບ, ສັງລວມຂໍ້ມູນ-ຂ່າວສານເພື່ອຕອບສະໜອງກັບການປະຕິບັດໜ້າທີ່ການເມືອງໃນໄລຍະໃໝ່, ເອົາໃຈໃສ່ຄົ້ນຄວ້າຮ່ຳຮຽນແນວທາງ-ທິດສະດີຂອງພັກ ເພື່ອເປັນການປັບປຸງຕົນເອງທາງດ້ານຄຸນທາດການເມືອງ-ຄຸນສົມບັດສິນທຳປະຕິວັດ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມ ແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຫຼືສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ສອນສັກ ວັນວິໄຊ)**

## ເຝິກການນຳໃຊ້...

(ຕໍ່ຈາກໜ້າ 1)

ແລະ ຊອກຫາເອກະສານ ແລະ ນິຕິກຳຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງແລະບັນດາອົງການລັດ ໃນລະບົບເຄືອຂ່າຍພາຍໃນ ແລະ ການຄຸ້ມຄອງ, ປັບປຸງ ແລະ ບົວລະບັດຮັກສາລະບົບ; ພ້ອມດຽວກັນນີ້, ຜູ້ເຂົ້າຮ່ວມກໍໄດ້ແລກປ່ຽນຖາມ-ຕອບຢ່າງກົງໄປກົງມາ ທັງໄດ້ລົງທະບຽນສະໝັກເຂົ້ານຳໃຊ້ເຄືອຂ່າຍດັ່ງກ່າວ ແລະ ທົດລອງນຳໃຊ້ຕົວຈິງໃນການເຂົ້າລະບົບແລະຊອກຄົ້ນບັນດາເອກະສານທີ່ຕ້ອງການ, ວິທີບຳລຸງຮັກສາລະບົບດັ່ງກ່າວໃຫ້ມີຄວາມປອດໄພ ເພື່ອເຮັດໃຫ້ສາມາດເຂົ້າໃຈຢ່າງຈະແຈ້ງ ແລະ ສາມາດນຳໃຊ້ໄດ້ຢ່າງຄ່ອງຕົວ ເພື່ອຈະສືບຕໍ່ນຳເອົາບົດຮຽນໃນຄັ້ງນີ້ ໄປເຝິກຕໍ່ໃຫ້ແກ່ພະນັກງານ-ລັດຖະກອນໃນຂົງເຂດຂອງຕົນ ສາມາດຮັບປະກັນໃນການຄົ້ນຄວ້າ ແລະ ສະໜອງຂໍ້ມູນໃຫ້ມີຄວາມວ່ອງໄວ ແລະ ໄດ້ຮັບຂໍ້ມູນຖືກຕ້ອງໃຫ້ແກ່ສສຊ ແລະ ສສຂ.

ການເຝິກອົບຮົມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ນາງ ກຸກກິກ ບຸດດາໄຊ)**



## ຖອດຖອນ...

(ຕໍ່ຈາກໜ້າ 1)

(ສພຊ)-ເພື່ອເປັນການແລກປ່ຽນບົດຮຽນ, ຄວາມຮັບຮູ້ເຂົ້າໃຈ ແລະ ມີຄວາມເປັນເອກະພາບກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນຂອງສະພາປະຊາຊົນຂັ້ນແຂວງ (ສພຂ) ໃຫ້ມີປະສິດທິພາບ ແລະ ຖືກຕ້ອງຕາມກົດໝາຍທີ່ກຳນົດໄວ້ ເປັນຕົ້ນ: ການກະກຽມ, ການດຳເນີນ, ການພິຈາລະນາ ແລະ ຮັບຮອງເນື້ອໃນກອງປະຊຸມເພື່ອເຫັນໄດ້ດ້ານດີທີ່ຈະຕ້ອງສືບຕໍ່ຈັດຕັ້ງປະຕິບັດ ແລະ ຂໍ້ຄົງຄ້າງທີ່ຈະຕ້ອງປັບປຸງແກ້ໄຂໃນຕໍ່ໜ້າ. ໃນວັນທີ 29 ເມສາ 2024 ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ, ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ(ກວສຊ) ໄດ້ຈັດກອງປະຊຸມຖອດຖອນບົດຮຽນການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ແລະ 6 ຂອງສະພາປະຊາຊົນຂັ້ນແຂວງ ຊຸດທີII ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ບັນດາທ່ານຮອງປະທານ ກວສຊ, ປະທານ-ຮອງປະທານ ສພຂ ຈາກ 17 ແຂວງ ແລະ ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ແລະ ເລຂາ-ຮອງເລຂາທິການ ສພຂ, ສປນວ ພ້ອມດ້ວຍຄະນະກົມ, ຄະນະພະແນກ ແລະ ລັດຖະກອນວິຊາການຈາກກຳມາທິການກ່ຽວຂ້ອງ.

ທ່ານ ຄຳໃບ ດຳລັດ ໄດ້ກ່າວວ່າ: ກອງປະຊຸມຄັ້ງນີ້ຈະໄດ້ພ້ອມກັນຮັບຟັງບົດສະຫຼຸບ, ບົດປະກອບຄຳເຫັນຕໍ່ກັບການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນຂອງສະພາປະຊາຊົນຂັ້ນແຂວງທັງສອງເທື່ອຜ່ານມາເພື່ອຖອດຖອນບົດຮຽນ, ຊອກໃຫ້ເຫັນດ້ານດີ ເພື່ອສືບຕໍ່ເສີມຂະຫຍາຍ ແລະ ຂໍ້ຄົງຄ້າງເພື່ອປັບປຸງແກ້ໄຂ ແນໃສ່ເຮັດໃຫ້ການກະກຽມ ແລະ ການດຳເນີນກອງປະຊຸມເທື່ອຕໍ່ໄປໄດ້ຮັບການປັບປຸງດ້ານຄຸນນະພາບສູງຂຶ້ນ ເປັນຕົ້ນ: ການກະກຽມ ແລະ ພິຈາລະນາ-ຮັບຮອງເອົາບັນດານິຕິກຳ, ບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ການຕິດຕາມກວດກາຂອງກອງປະຊຸມລວມທັງການກະກຽມແລະດຳເນີນການປະເມີນບຸກຄະລາກອນທີ່ມາລາຍງານ, ຊີ້ແຈງແລະຕອບຄຳຊັກຖາມໃນກອງປະຊຸມສະໄໝສາມັນແຕ່ລະຄັ້ງ. ກອງປະຊຸມຈະໄດ້ດຳເນີນເປັນເວລາ 02 ວັນ ເຊິ່ງມີຫຼາຍບັນຫາທີ່ນຳມາສົນທະ ນາແລກປ່ຽນຄຳຄິດຄຳເຫັນຮ່ວມກັນ; ເຖິງຢ່າງໃດກໍດີ ເພື່ອຮັບປະກັນເຮັດໃຫ້ກອງປະຊຸມດຳເນີນໄປດ້ວຍຜົນສຳເລັດຕາມຈຸດປະສົງແລະລະດັບຄາດໝາຍທີ່ວາງໄວ້ ຮຽກຮ້ອງມາຍັງບັນດາທ່ານຜູ້ແທນກອງປະຊຸມ ຈົ່ງເອົາໃຈໃສ່ສຸມສະຕິປັນຍາ ແລະ ເປັນເຈົ້າການໃນການຄົ້ນຄວ້າ, ແລກປ່ຽນຄຳຄິດເຫັນຢ່າງສ້າງສັນມີຈຸດສຸມ, ຮັກສາເວລາເພື່ອຮັບປະກັນໃຫ້ເນື້ອໃນກອງປະຊຸມ ມີປະສິດທິພາບ ແລະ ປະສິດທິຜົນສູງ.

ໃນກອງປະຊຸມ, ໄດ້ຮັບຟັງການສະເໜີບົດລາຍງານກ່ຽວກັບການສະຫຼຸບ, ຕີລາຄາຜົນສຳເລັດການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ແລະ 6 ຂອງ ສພຂ ຊຸດທີ II ຈາກທ່ານ ຄຳສິງ ໄຊສົມແພງ ຮອງປະທານ ກວສຊ; ການກະກຽມ ແລະ ພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງທ້ອງຖິ່ນໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສພຂ ຊຸດທີ II ຈາກປະທານ ສພຂ ຜົ້ງສາລີ; ການກະກຽມ ແລະ ພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງທ້ອງຖິ່ນໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສພຂ ຊຸດທີ II ຈາກປະທານ ສພຂ ຫຼວງນ້ຳທາ; ການກະກຽມ ແລະ ພິຈາລະນາ, ຮັບຮອງເອົານິຕິກຳສຳຄັນຂອງທ້ອງຖິ່ນຂອງ ສພຂ ຊຸດທີ II ຈາກປະທານ ສພຂ ຄຳມ່ວນ; ການຕິດຕາມກວດກາຂອງກອງປະຊຸມ ສພຂ, ການກະກຽມແລະດຳເນີນການປະເມີນບຸກຄະລາກອນທີ່ມາລາຍງານ, ຊີ້ແຈງ ແລະ ຕອບຄຳຊັກຖາມ ກອງປະຊຸມ ສພຂ ຊຸດທີ II ຈາກປະທານ ສພຂ ສາລະວັນ. ຈາກນັ້ນ, ບັນດາຜູ້ແທນກອງປະຊຸມ ໄດ້ເອົາໃຈໃສ່ສຸມສະຕິປັນຍາ ແລະ ເປັນເຈົ້າການໃນການຄົ້ນຄວ້າ, ແລກປ່ຽນຄຳຄິດເຫັນຢ່າງສ້າງສັນ ແລະ ມີຈຸດສຸມ.

ກອງປະຊຸມຄັ້ງນີ້ ຈະໄດ້ດຳເນີນໄປຈົນຮອດວັນທີ 30 ເມສາ 2024 ຈຶ່ງຈະສຳເລັດ; ເຊິ່ງໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຫຼືສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ນາງ ສຸພາວັນ ທອມສະນິດ)**






## ການຈັດຕັ້ງ...

(ຕໍ່ຈາກໜ້າ 1)

ຕາງໜ້າປະທານໄອປາຄັ້ງທີ45, ທ່ານໄດ້ຍົກໃຫ້ເຫັນເຖິງຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ການປ່ຽນແປງດິນຟ້າອາກາດ, ປາກົດການແຫ້ງແລ້ງ, ໄພພິບັດທາງທຳມະຊາດ ທີ່ສົ່ງຜົນກະທົບໂດຍກົງຕໍ່ການຜະລິດກະສິກຳ ແລະ ປ່າໄມ້ ກໍຄືການຄ້ຳປະກັນສະບຽງອາຫານ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນໃນພາກພື້ນ ໄດ້ຮັບຜົນກະທົບຢ່າງຫຼີກລ່ຽງບໍ່ໄດ້; ດ້ວຍເຫດນັ້ນ, ມີຄວາມຈຳເປັນຫຼາຍທີ່ສະມາຊິກອາຊຽນຕ້ອງເພີ່ມທະວີການຮ່ວມມືຢ່າງສະໜິດແໜ້ນເພື່ອຊອກຫາວິທີແກ້ໄຂບັນຫາໃຫ້ແທດເໝາະທີ່ສຸດ ເພື່ອສາມາດຮັບມືກັບສິ່ງທ້າທາຍ ແລະ ຫັນເອົາສິ່ງທ້າທາຍເຫຼົ່ານັ້ນ ມາເປັນກາລະໂອກາດສ້າງຜົນປະໂຫຍດສູງສຸດໃຫ້ແກ່ປະຊາຊົນ, ເຊິ່ງສຳລັບ ສປປລາວ ແມ່ນໄດ້ເນັ້ນໜັກການພັດທະນາ ແລະ ສົ່ງເສີມການຜະລິດກະສິກຳ ແລະ ປ່າໄມ້ ໃຫ້ໄປຕາມທິດສີຂຽວ ແລະ ຍືນຍົງ, ປະກອບສ່ວນເຂົ້າໃນການຫຼຸດຜ່ອນອາຍພິດເຮືອນແກ້ວ-ຫຼຸດຜ່ອນໂລກຮ້ອນແລະສຸມໃສ່ດຶງດູດການລົງທຶນດ້ານເຕັກໂນໂລຊີ, ປັດໄຈການຜະລິດຕ່າງໆ ໃຫ້ແທດເໝາະກັບທ້ອງຖິ່ນ, ພ້ອມທັງຊອກຫາຊ່ອງທາງເພື່ອເຂົ້າເຖິງຕະຫຼາດຕ່າງປະເທດເພີ່ມຕື່ມ. ພ້ອມດຽວກັນນັ້ນ, ທ່ານໄດ້ຍົກໃຫ້ເຫັນວ່າ ກອງປະຊຸມຄັ້ງນີ້ ຈະເປັນໂອກາດອັນດີໃຫ້ແກ່ບັນດາສະມາຊິກລັດຖະສະພາອາຊຽນ ໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນ ທີ່ປະຕິບັດໜ້າທີ່ດ້ານນິຕິບັນຍັດ, ຕິດຕາມກວດກາ ແລະ ຕົກລົງບັນຫາສຳຄັນຂອງຊາດ ໄດ້ແລກປ່ຽນ ແລະ ຖອດຖອນບົດ ຮຽນທີ່ດີຮ່ວມກັນ ເພື່ອນຳໄປຈັດຕັ້ງຜັນຂະຫຍາຍຢູ່ພາຍໃນປະເທດຂອງຕົນກ່ຽວກັບການຈັດຕັ້ງປະຕິບັດບົດແນະນຳຂອງອາຊຽນສຳລັບການລົງທຶນຢ່າງມີຄວາມຮັບຜິດຊອບໃນດ້ານສະບຽງອາຫານ, ກະສິກຳ ແລະ ປ່າໄມ້ ໃຫ້ໄດ້ດີກວ່າເກົ່າ.

ນອກຈາກນັ້ນ, ໃນກອງປະຊຸມຍັງໄດ້ມີການປະກອບຄຳເຫັນ ແລະ ເປັນປະທານຮ່ວມໃນພິທີເປີດໂດຍທ່ານ ນາງ ຊິຕິ ໂຣໄຊເມຣີຍັນຕີ ດາໂຕະ ຫາຈິ ອັບດຸນ ຣາມັນ ເລຂາທິການໃຫຍ່ໄອປາ, ທ່ານ ນາງ ຄີຍັງ ມິກົມ ຜູ້ຕາງໜ້າອົງການອາຫານ ແລະ ກະສິກຳ ປະຈຳ ສປປ ລາວ ແລະ ທ່ານ ມະນີໂສ ຊາມຸນຕີ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມສະພາແຫ່ງຊາດລາວ.

ໃນກອງປະຊຸມ, ຄະນະຜູ້ແທນໄດ້ຮັບຟັງການລາຍງານກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດບົດແນະນຳຂອງອາຊຽນສຳລັບການລົງທຶນຢ່າງມີຄວາມຮັບຜິດຊອບໃນດ້ານສະບຽງອາຫານ, ກະສິກຳ ແລະ ປ່າໄມ້ ເຊິ່ງຄະນະຜູ້ແທນໄດ້ສຸມໃສ່ຄົ້ນຄວ້າ ແລະ ປຶກສາຫາລືກ່ຽວກັບການວາງແນວທາງນະໂຍບາຍ, ການປະເມີນຄວາມສອດຄ່ອງຂອງລະບຽບກົດໝາຍ, ການສະໜອງງົບປະມານ ແລະການຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນລະດັບຊາດແລະພາກພື້ນ ໃຫ້ມີປະສິດທິພາບແລະປະສິດທິຜົນສູງສຸດ. ໃນນັ້ນ, ທ່ານ ຈັນທະວົງ ແສນອາມາດມົນຕີ ຮອງປະທານກຳມາທິການການຕ່າງປະເທດ ຕາງໜ້າໃຫ້ແກ່ຄະນະຜູ້ແທນລາວ ມີຄຳເຫັນຕໍ່ກອງປະຊຸມ ເຊິ່ງໄດ້ຍົກໃຫ້ເຖິງຄວາມພະຍາຍາມຂອງ ສປປລາວ ໃນການປັບປຸງ ແລະ ພັດທະນານິຕິກຳ ເພື່ອຊຸກຍູ້ສົ່ງເສີມການລົງທຶນທາງດ້ານສະບຽງອາຫານ, ໂພຊະນາການ, ກະສິກຳ ແລະ ປ່າໄມ້ ຢ່າງມີຄວາມຮັບຜິດຊອບ ເຊິ່ງມີຄວາມສອດຄ່ອງກັບບັນດາຄຳແນະນຳຂອງ ASEAN-RAI ເປັນຢ່າງດີ ເປັນຕົ້ນ: ກົດໝາຍວ່າດ້ວຍກະສິກຳ, ກົດໝາຍວ່າດ້ວຍການລ້ຽງສັດ, ກົດໝາຍວ່າດ້ວຍຊົນລະປະທານ, ກົດໝາຍວ່າດ້ວຍອາຫານ, ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍປ່າໄມ້ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງ; ແຕ່ເຖິງຢ່າງໃດກໍຕາມ, ຍັງມີສິ່ງທ້າທາຍຈຳນວນໜຶ່ງທີ່ຕ້ອງໄດ້ເອົາໃຈໃສ່, ຕ້ອງໄດ້ມີການຮ່ວມມືກັນຢ່າງຈິງຈັງ ທັງພາກລັດ, ເອກະຊົນ ແລະ ຄູ່ຮ່ວມພັດທະນາ ໃນການຊຸກຍູ້, ສົ່ງເສີມ ແລະ ລົງທຶນເຂົ້າໃນການຈັດຕັ້ງປະຕິບັດວຽກງານການຄ້ຳປະກັນແລະຄວາມໝັ້ນຄົງດ້ານສະບຽງອາຫານ, ໂພຊະນາການ, ກະສິກຳ ແລະປ່າໄມ້ ໃຫ້ໄປຕາມທິດການພັດທະນາສີຂຽວ ແລະ ຍືນຍົງ ໂດຍທ່ານໄດ້ສະເໜີບາງທັດສະນະກ່ຽວກັບການຈັດຕັ້ງປະຕິບັດຄຳແນະນຳຂອງ ASEAN-RAI ດ້ວຍການປູກຈິດສຳນຶກ, ຝຶກອົບຮົມ, ສຳມະນາ, ທັດສະນະສຶກສາ ແລະ ຖອດຖອນບົດຮຽນ ລວມທັງເຜີຍແຜ່ໃຫ້ບຸກຄະລາກອນ, ປະຊາຊົນ, ຜູ້ປະກອບການ ແລະ ຂະແໜງການກ່ຽວຂ້ອງ ໃຫ້ຮັບຮູ້ ແລະ ເຂົ້າໃຈຄວາມສຳຄັນຂອງວຽກງານດັ່ງກ່າວ; ແບ່ງປັນ ແລະ ແລກປ່ຽນຂໍ້ມູນ-ຂ່າວສານທາງດ້ານເຕັກນິກ, ເຕັກໂນໂລຊີ ເຊິ່ງກັນ ແລະ ກັນ; ຊຸກຍູ້ ແລະ ສົ່ງເສີມການລົງທຶນເຂົ້າໃສ່ວຽກງານດັ່ງກ່າວໃຫ້ເປັນຮູບປະທຳຫຼາຍຂຶ້ນ ພ້ອມທັງເພີ່ມທະວີການຕິດຕາມກວດກາແລະປະເມີນຜົນການຈັດຕັ້ງປະຕິບັດວຽກງານເປັນແຕ່ລະໄລຍະ ຢ່າງເປັນລະບົບ ແລະ ຕໍ່ເນື່ອງ.

ກອງປະຊຸມຄັ້ງຕໍ່ໄປ ຈະໄດ້ຈັດຂຶ້ນໃນກາງປີນີ້ ໂດຍຜົນຂອງກອງປະຊຸມຈະຖືກນຳໄປເຜີຍແຜ່ຜ່ານທາງເວັບໄຊຂອງກອງເລຂາໄອປາແລະຈະມີຮ່າງມະຕິຮັບຮອງເອົາຜົນຂອງກອງປະຊຸມດັ່ງກ່າວ ໃນກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ທີ່ສະພາແຫ່ງຊາດ ແຫ່ງ ສປປລາວ ຈະເປັນເຈົ້າພາບໃນເດືອນຕຸລາ 2024.

# ສະຫຼຸບການນຳພາ-ຊີ້ນຳຂອງໜ່ວຍພັກ ສະພາປະຊາຊົນແຂວງອຸດົມໄຊ




(ສພຊ) - ຕອນບ່າຍຂອງວັນທີ 22 ເມສາ 2024 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ, ໜ່ວຍພັກສະພາປະຊາຊົນແຂວງອຸດົມໄຊໄດ້ດຳເນີນຊີວິດພັກປະຈຳເດືອນເມສາ 2024 ໂດຍການເປັນປະທານຂອງສະຫາຍ ທອງຄານ ວັດສະດາກອນ ເລຂາໜ່ວຍພັກສະພາປະຊາຊົນແຂວງ, ມີສະຫາຍນາງ ຄຳພອນ ພິມມະຈັນ ຮອງປະທານສະພາປະຊາຊົນແຂວງ, ຄະນະພັກ, ສະມາຊິກພັກພາຍໃນໜ່ວຍພັກສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ສະຫາຍເລຂາໜ່ວຍພັກໄດ້ຜ່ານຮ່າງບົດສະຫຼຸບການເຄື່ອນໄຫວນຳພາ-ຊີ້ນຳຂອງຄະນະໜ່ວຍພັກສະພາປະຊາຊົນແຂວງ ປະຈຳເດືອນເມສາ ປີ 2024 ເຊິ່ງຕະຫຼອດໄລຍະ 1 ເດືອນທີ່ຜ່ານມາ ຄະນະພັກໄດ້ເອົາໃຈໃສ່ໃນການນຳພາ-ຊີ້ນຳ ຢ່າງໃກ້ຊິດຕິດແທດສະມາຊິກພັກ, ດຳເນີນຊີວິດພັກເປັນປົກກະຕິ, ເຮັດໃຫ້ສະມາຊິກພັກພາຍໃນໜ່ວຍມີແນວຄິດອຸ່ນອ່ຽນທຸ່ນທ່ຽງ, ມີທັດສະນະຫຼັກໝັ້ນ, ມີຄວາມສາມັກຄີເປັນຈິດໜຶ່ງໃຈດຽວ, ປະຕິບັດກົດລະບຽບພັກ, ປະຕິບັດໜ້າທີ່ຄວາມຮັບຜິດຊອບດ້ານວຽກງານວິຊາສະເພາະຂອງຕົນຕາມການມອບໝາຍ, ມີຜົນສຳເລັດໃນດ້ານ ແລະ ໄດ້ວາງທິດທາງແຜນການປະຈຳເດືອນພຶດສະພາ 2024 ເຊິ່ງຄະນະພັກຈະໄດ້ສືບຕໍ່ໃນການນຳພາ-ຊີ້ນຳການປະຕິບັດໜ້າທີ່ຄວາມຮັບຜິດຊອບດ້ານວຽກງານວິຊາສະເພາະຂອງສະມາຊິກພັກໃນການເປັນເສນາທິການ ເປັນຕົ້ນການທາບທາມຄຳເຫັນໃສ່ຮ່າງກົດໝາຍ ຈຳນວນ 10 ສະບັບ, ການຈັດເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ສະມາຊິກສະພາປະຊາຊົນແຂວງ ແລະ ວຽກງານຕ່າງໆ.

ຫຼັງຈາກນັ້ນ, ບັນດາສະຫາຍສະມາຊິກພັກ ໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບດັ່ງກ່າວ, ຕຳນິສິ່ງຂ່າວເຊິ່ງກັນແລະກັນ ຢ່າງຈິງອົກຈິງໃຈ, ກົງໄປກົງມາ ແລະ ໄດ້ມີຄຳຄິດຄຳເຫັນເພີ່ມເຕີມ ກ່ຽວກັບວຽກງານອື່ນໆຕື່ມອີກ.

**(ນັກຂ່າວ ສພຊ ອຸດົມໄຊ)**

# ສພຂ ຫົວພັນ ສຳເລັດການເຊື່ອມຊຶມເອກະສານສຳຄັນຂອງຊາດ ແລະ ຂອງແຂວງ



(ສພຊ) - ວັນທີ 24 ເມສາ 2024 ຢູ່ທີ່ຫ້ອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ຈັດກອງປະຊຸມເຊື່ອມຊຶມຄຳສັ່ງແນະນຳຂອງຄະນະເລຂາທິການສູນກາງພັກກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳຕໍ່ການເຄື່ອນໄຫວວຽກງານກວດກາ ແລະ ແກ້ໄຂຜົນການກວດກາ; ຄຳແນະນຳຂອງອົງການກວດກາແຫ່ງລັດກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ); ຄຳແນະນຳຂອງຄະນະກວດກາສູນກາງພັກກ່ຽວກັບການກະກຽມ ແລະ ດຳເນີນຊີວິດການເມືອງ ທ້າຍສະໄໝ ກອງປະຊຸມໃຫຍ່ 3 ຂັ້ນຂອງພັກ; ຄຳແນະນຳຂອງຄະນະກວດກາສູນກາງພັກ ກ່ຽວກັບປັບປຸງການຈັດຕັ້ງຄະນະກວດກາພັກ ແລະ ອົງການກວດກາລັດແຕ່ລະຂັ້ນ; ບົດສະຫຼຸບຕີລາຄາການເຄື່ອນໄຫວວຽກງານກວດກາປະຈຳປີ 2023 ແລະ ທິດທາງແຜນການເຄື່ອນໄຫວ ປະຈຳປີ 2024 ຂອງຄະນະກວດກາພັກແຂວງຫົວພັນ ແລະ ບົດໂອ້ລົມຂອງເຈົ້າແຂວງຫົວພັນ ຕໍ່ກອງປະຊຸມວຽກງານກວດກາທົ່ວແຂວງຫົວພັນໂດຍການເຜີຍແຜ່ ແລະ ເຊື່ອມຊຶມຂອງສະຫາຍ ຄຳຟອງ ກົ້ວມີໄຊ ຮອງເລຂາປະທານກວດກາໜ່ວຍພັກ, ເລຂາທິການສະພາປະຊາຊົນແຂວງ; ມີບັນດາສະຫາຍຄະນະພັກ, ຫົວໜ້າ-ຮອງຫົວໜ້າຂະແໜງ, ສະມາຊິກພັກ ແລະ ພະນັກງານ-ລັດຖະກອນ ພາຍໃນ ສພຂ ເຂົ້າຮ່ວມ.

ການເຊື່ອມຊຶມໃນຄັ້ງນີ້, ແມ່ນເພື່ອເຜີຍແຜ່ຜັນຂະຫຍາຍໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ ໄດ້ຮັບຮູ້, ເຂົ້າໃຈມີຄວາມເປັນເອກະພາບກັນ, ມີການຫັນປ່ຽນຢ່າງຕັ້ງໜ້າ, ແຂງແຮງ, ເລິກເຊິ່ງ, ເຂົ້າໃຈຢ່າງຖືກຕ້ອງ, ຄົບຖ້ວນ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຕົວຈິງ.

ຕອນທ້າຍ, ສະຫາຍ ຄຳຟອງ ກົ້ວມີໄຊ ໄດ້ເນັ້ນໜັກໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນພາຍໃນ ສພຂ ທີ່ໄດ້ຮັບການເຊື່ອມຊຶມ ຈົ່ງພ້ອມກັນກຳແໜ້ນ ແລະ ນຳເອົາເນື້ອໃນເອກະສານຕ່າງໆ ທີ່ມາເຜີຍແຜ່ນຳໄປຄົ້ນຄວ້າ, ໄປໝູນໃຊ້ເຂົ້າໃນວຽກງານຕົວຈິງ ແລະ ວິຊາສະເພາະຂອງຕົນ ໃຫ້ມີຜົນສຳເລັດຕາມການຈັດຕັ້ງມອບໝາຍໃຫ້.

**(ນັກຂ່າວ ສພຂ ຫົວພັນ)**

# ທາບທາມຄຳເຫັນໃສ່ຮ່າງກົດໝາຍ 5 ສະບັບ ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 7




(ສພຊ) - ເພື່ອຈັດຕັ້ງຜັນຂະຫຍາຍຄຳແນະນຳຂອງກຳມາທິການກົດໝາຍ ສະພາແຫ່ງຊາດ ໃນການທາບທາມລະດົມສະຕິປັນຍາ, ຄຳຄິດເຫັນທີ່ເປັນປະໂຫຍດຂອງສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ກໍຄືເປົ້າໝາຍທີ່ກ່ຽວຂ້ອງຕ່າງໆທີ່ເຂົ້າຮ່ວມທາບທາມ; ໃນວັນທີ 25 ເມສາ 2024 ທີ່ສຳນັກງານສະພາປະຊາຊົນແຂວງຄຳມ່ວນ ໄດ້ເປີດກອງປະຊຸມທາບທາມຄຳເຫັນໃສ່ຮ່າງກົດໝາຍ ທີ່ຈະນຳເຂົ້າພິຈາລະນາແລະຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ໂດຍການເປັນປະທານຂອງທ່ານ ບຸນມີ ພິມມະສອນ ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ, ປະທານສະພາປະຊາຊົນແຂວງ;ເຂົ້າຮ່ວມມີຮອງປະທານສະພາປະຊາຊົນແຂວງ, ບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ, ອົງການກວດກາພັກ-ລັດແຂວງ, ພະແນກການທີ່ກ່ຽວຂ້ອງ ຕະຫຼອດຮອດແຂກຖືກເຊີນເຂົ້າຮ່ວມ.

ທ່ານ ສະເຫຼີມ ສັກແກ້ວຈັນທະລາ ເລຂາທິການສະພາປະຊາຊົນແຂວງຄຳມ່ວນ ໄດ້ສະເໜີບົດຮ່າງກົດໝາຍ ຈຳນວນ 5 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍສະຫະກອນ (ສ້າງໃໝ່), ຮ່າງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ(ສ້າງໃໝ່), ຮ່າງກົດໝາຍວ່າດ້ວຍການສໍ້ລາດບັງຫຼວງ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ແລະ ຮ່າງກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມເຊື້ອເຮສໄອວີ/ພະຍາດເອດ(ສະບັບປັບປຸງ); ຈາກນັ້ນ, ບັນດາທ່ານຜູ້ແທນເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນຄົ້ນຄວ້າລະດົມແນວຄຳຄິດ, ຄຳເຫັນປະກອບໃສ່ຮ່າງກົດໝາຍ ຈຳນວນ 5 ສະບັບ ຢ່າງມີຈຸດສຸມໃຫ້ມີຄວາມຄົບຖ້ວນ, ຖືກຕ້ອງ, ສອດຄ່ອງ, ແທດເໝາະກັບສະພາບຕົວຈິງ ແລະ ທັນກັບກຳນົດເວລາ ໃນການລາຍງານຕໍ່ຄະນະຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍຂອງສະພາແຫ່ງຊາດ.

ຕອນທ້າຍກອງປະຊຸມ, ທ່ານ ບຸນມີ ພິມມະສອນ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍບັນດາທ່ານຜູ້ແທນ ແລະ ແຂກຜູ້ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ທີ່ໄດ້ເອົາໃຈໃສ່ຄົ້ນຄວ້າ, ປະກອບຄຳເຫັນຢ່າງກົງໄປກົງມາ ແລະ ມີເນື້ອໃນຈິດໃຈທີ່ສະແດງເຖິງຄວາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າຢ່າງແທ້ຈິງ; ພ້ອມນັ້ນ, ກໍໄດ້ສະແດງຄວາມຊົມເຊີຍຕໍ່ກອງເລຂາກອງປະຊຸມ ທີ່ເອົາໃຈໃສ່ບັນທຶກ ແລະ ສັງລວມການປະກອບຄຳເຫັນເພື່ອຈະລາຍງານໃຫ້ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12 ລາຍງານຕໍ່ຄະນະຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍ ສະພາແຫ່ງຊາດໄດ້ຮັບຊາບຕາມກຳນົດເວລາ, ເພື່ອໃຫ້ສາມາດນຳເອົາຮ່າງກົດໝາຍ ຈຳນວນ 5 ສະບັບດັ່ງກ່າວເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄດ້ໄຂຂຶ້ນໃນບໍ່ດົນຕໍ່ໜ້ານີ້.

**(ເອື້ອ ມະໂນສິງ)**



# ຄະນະຜູ້ແທນ ສປນວ ຢ້ຽມຢາມ ແລະ ແລກປ່ຽນບົດຮຽນກັບຄະນະຜູ້ແທນນະຄອນໂຮ່ ຈິ ມິງ



(ສພຊ) - ເພື່ອເປັນການສົ່ງເສີມສາຍພົວພັນມິດຕະພາບອັນເປັນມູນເຊື້ອອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ສອງສະພາປະຊາຊົນຂັ້ນທ້ອງຖິ່ນ ໃນການຍົກສູງປະສິດທິຜົນການເຄື່ອນໄຫວວຽກງານ ແລະ ພາລະບົດບາດຂອງສະພາປະຊາຊົນຂັ້ນທ້ອງຖິ່ນໃຫ້ພົ້ນເດັ່ນຂຶ້ນ, ໃນໄລຍະວັນທີ 23-26 ເມສາ 2024 ຜ່ານມາ, ສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ນຳໂດຍ ສະຫາຍ ບຸນທາມ ພຸດທະວົງສາ ກຳມະການພັກ ນະຄອນຫຼວງວຽງຈັນ, ຮອງປະທານ ສປນວ ພ້ອມດ້ວຍຄະນະ ໄດ້ເດີນທາງໄປຢ້ຽມຢາມ ແລະ ແລກປ່ຽນບົດຮຽນ ກັບສະພາປະຊາຊົນນະຄອນ ໂຮ່ ຈິ ມິງ, ສສ. ຫວຽດນາມ ເພື່ອລົງນາມເຊັນບົດບັນທຶກການຮ່ວມມື ລະຫວ່າງສອງສະພາປະຊາຊົນນະຄອນ ຂອງສອງປະເທດ ແລະ ພົບປະແລກປ່ຽນບົດຮຽນດ້ານວຽກງານການຕິດຕາມກວດກາ, ວຽກງານນິຕິກຳ ເປັນຕົ້ນ: ການຄຸ້ມຄອງການລົງທຶນພາຍໃນ ແລະ ຕ່າງປະເທດ ແລະ ການພິຈາລະນາຮັບຮອງເອົານິຕິກຳຂອງທ້ອງຖິ່ນ.

ການຢ້ຽມຢາມຄັ້ງນີ້, ຄະນະຜູ້ແທນ ສປນວ ໄດ້ຮັບການຕ້ອນຮັບໂດຍສະຫາຍ ນາງ ຫງວຽນ ທີ ເລ໋ ຮອງເລຂາພັກ, ປະທານສະພາປະຊາຊົນນະຄອນ ໂຮ່ ຈິ ມິງ ພ້ອມດ້ວຍຄະນະ ໃນນີ້, ຄະນະຜູ້ແທນທັງສອງຝ່າຍ ໄດ້ເຊັນ ແລະ ມອບຮັບບົດບັນທຶກຮ່ວມມື MOC ລະຫວ່າງ ສປນວ ແລະ ສະພາປະຊາຊົນນະຄອນ ໂຮ່ ຈິ ມິງ ໃນໄລຍະປີ 2024-2026 ລົງນາມໂດຍສະຫາຍ ຮວິ່ງ ແທ່ງ ເຍິ່ນ ກຳມະການພັກ, ຮອງປະທານສະພາປະຊາຊົນ ນະຄອນ ໂຮ່ ຈິ ມິງ ສສ. ຫວຽດນາມ ແລະ ສະຫາຍ ບຸນທາມ ພຸດທະວົງສາ ກຳມະການພັກ, ຮອງປະທານ ສປນວ ສປປ ລາວ ເຊິ່ງເປັນການລິເລີ່ມສ້າງສາຍພົວພັນ ລະຫວ່າງ ສອງສະພາປະຊາຊົນໃນຖານະທີ່ເປັນອົງການນິຕິບັນຍັດຂັ້ນທ້ອງຖິ່ນໃຫ້ແໜ້ນແຟ້ນຍິ່ງຂຶ້ນ; ພ້ອມດຽວກັນນີ້, ໃນເວທີພົບປະສອງຝ່າຍ ຄະນະຜູ້ແທນທັງສອງຝ່າຍ ໄດ້ລົງເລິກແລກປ່ຽນບົດຮຽນການປະຕິບັດພາລະບົດບາດດ້ານການຕິດຕາມກວດກາ ແລະ ດ້ານນິຕິກຳເປັນຕົ້ນແມ່ນການຕິດຕາມກວດກາການຄຸ້ມຄອງການລົງທຶນພາຍໃນ ແລະ ຕ່າງປະເທດ, ບົດຮຽນການຕິດຕາມກວດກາການສ້າງນິຕິກຳ, ການພິຈາລະນາຮັບຮອງເອົານິຕິກຳຂອງທ້ອງຖິ່ນ ເຊິ່ງທາງຝ່າຍເພື່ອນ ໄດ້ຍົກໃຫ້ເຫັນການປະຕິບັດວຽກງານຂອງສະພາປະຊາຊົນ ນະຄອນໂຮ່ ຈິ ມິງ ໂດຍສ່ວນໃຫຍ່ໄດ້ເນັ້ນໃສ່ການປະຕິບັດກົດໝາຍທີ່ກ່ຽວຂ້ອງກັບຂົງເຂດວຽກງານດັ່ງກ່າວ ເຊິ່ງເປັນບົດຮຽນທີ່ດີໃຫ້ແກ່ ສະພາປະຊາຊົນ ນະຄອນຫຼວງວຽງຈັນ ໄດ້ນຳໄປຈັດຕັ້ງປະຕິບັດຜັນຂະຫຍາຍໃນຕໍ່ໜ້າ; ນອກຈາກນີ້, ທັງສອງຝ່າຍຍັງໄດ້ແລກປ່ຽນບົດຮຽນໃນຂົງເຂດວຽກງານອື່ນໆ ເປັນຕົ້ນແມ່ນບົດຮຽນດ້ານເສດຖະກິດ, ດ້ານການແກ້ໄຂຄຳຮ້ອງທຸກ ແລະ ດ້ານການສຶກສາ.

ໂອກາດດັ່ງກ່າວ, ຄະນະຜູ້ແທນໄດ້ເຂົ້າຢ້ຽມຢາມສະຖານກົງສູນໃຫຍ່ແຫ່ງ ສປປ ລາວ ທີ່ນະຄອນໂຮ່ ຈິ ມິງ ໂດຍໄດ້ຮັບການຕ້ອນຮັບຈາກທ່ານ ພອນສີ ບຸນມີໄຊ ກົງສູນໃຫຍ່ແຫ່ງ ສປປ ລາວ ປະຈຳນະຄອນໂຮ່ ຈິ ມິນ ສສ. ຫວຽດນາມ ພ້ອມດ້ວຍຄະນະ ແລະ ໄດ້ຢ້ຽມຊົມສະຖານທີ່ທ່ອງທ່ຽວທາງປະຫວັດສາດຂອງນະຄອນໂຮ່ ຈິ ມິງ, ຢ້ຽມຊົມສະຖານທີ່ທ່ອງທ່ຽວຂອງແຂວງຫວຸງເຕົ່າ ໂດຍສະເພາະທະເລ ເຫັນໄດ້ວ່າ ເປັນສະຖານທີ່ ທີ່ມີຄວາມສະອາດ ງົດງາມ, ມີສິ່ງອຳນວຍຄວາມສະດວກດ້ານຕ່າງໆໃຫ້ແກ່ນັກທ່ອງທ່ຽວ ເຊິ່ງເປັນສະຖານທີ່ຫຼັກໃນການດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດເຂົ້າມາທ່ຽວຊົມ.

## ສະພາປະຊາຊົນແຂວງໄຊຍະບູລີ ທາບທາມ ແລະ ປະກອບຄຳເຫັນໃສ່ຮ່າງກົດໝາຍ 5 ສະບັບ



(ສພຊ) - ກອງປະຊຸມທາບທາມ ແລະ ປະກອບຄຳເຫັນໃສ່ຮ່າງກົດໝາຍ 5 ສະບັບຄື: ຮ່າງກົດໝາຍວ່າດ້ວຍສະຫະກອນ (ສ້າງໃໝ່), ຮ່າງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ (ປັບປຸງ), ຮ່າງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ປັບປຸງ), ຮ່າງກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມເຊື້ອເອັດຈ໌ໄອວີ/ພະຍາດເອດ (ປັບປຸງ) ແລະຮ່າງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ (ສ້າງໃໝ) ໄດ້ຈັດຂຶ້ນໃນວັນທີ 24 ເມສາ 2024 ທີ່ຫ້ອງປະຊຸມພະແນກສຶກສາທິການ ແລະ ກິລາແຂວງໄຊຍະບູລີ ໂດຍການເປັນປະທານຂອງທ່ານ ເພັງນິລັນ ຄຳພັນເພັງ ປະທານສະພາປະຊາຊົນແຂວງໄຊຍະບູລີ; ມີຫົວໜ້າ-ຮອງຫົວໜ້າຂະແໜງການ ພ້ອມດ້ວຍວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນກອງປະຊຸມຜູ້ເຂົ້າຮ່ວມໄດ້ປະກອບຄຳຄິດຄຳເຫັນໃສ່ບັນດາເນື້ອໃນຮ່າງກົດໝາຍທັງ5ສະບັບເຊັ່ນ:ຮ່າງກົດໝາຍວ່າດ້ວຍສະຫະກອນ (ສ້າງໃໝ່) ມີ 47 ມາດຕາ, ຮ່າງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ (ສະບັບປັບປຸງ) ມີ 93 ມາດຕາ, ຮ່າງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ປັບປຸງ) ມີ 95 ມາດຕາ, ຮ່າງກົດໝາຍວ່າດ້ວຍການກັນ ແລະ ຄອບຄຸມເຊື້ອເຮສໄອວີ/ພະຍາດເອດ (ປັບປຸງ) ມີ 16 ມາດຕາ 7 ພາກ, ຮ່າງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ (ສ້າງໃໝ) ມີ 39 ມາດຕາ 6 ພາກ; ການທາບທາມຄັ້ງນີ້ ກໍເພື່ອຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນຢ່າງມີຈຸດສຸມ ແນໃສ່ເຮັດໃຫ້ເນື້ອໃນຮ່າງກົດໝາຍມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃຫ້ມີຜົນສຳເລັດຢ່າງຈົບງາມ.

**(ອິນທີ ຊຽວສີຟ້າ)**

## ສພຂ ວຽງຈັນ ເຊື່ອມຊຶມເອກະສານ ເພື່ອກະກຽມດຳເນີນກອງປະຊຸມໃຫຍ່ຂອງພັກ 3 ຂັ້ນ



(ສພຂ) - ໃນວັນທີ 26 ເມສາ 2024 ສະພາປະຊາຊົນແຂວງ (ສພຂ) ວຽງຈັນ ໄດ້ຈັດກອງປະຊຸມເຊື່ອມຊຶມເອກະສານກ່ຽວກັບການນຳໃຊ້ເອກະສານສຶກສາອົບຮົມການເມືອງ-ແນວຄິດ ສຳລັບສະມາຊິກພັກ, ພະນັກງານຫຼັກແຫຼ່ງ ໂດຍການເຜີຍແຜ່ເຊື່ອມຊຶມຂອງທ່ານ ນາງ ຈັນທະຄອນ ສີອຳພອນ ເລຂາໜ່ວຍພັກ ສພຂ ວຽງຈັນ; ເຂົ້າຮ່ວມມີຄະນະພັກ, ຈຸພັກ, ສະມາຊິກພັກ, ພະນັກງານຫຼັກແຫຼ່ງພາຍໃນ ສພຂ ວຽງຈັນເຂົ້າຮ່ວມຢ່າງພ້ອມພຽງ.

ທັງນີ້, ກໍເພື່ອເຮັດໃຫ້ພະນັກງານ, ສະມາຊິກພັກ ມີຄວາມຮັບຮູ້, ເຂົ້າໃຈກ່ຽວກັບຄວາມໝາຍ ແລະ ຄວາມສຳຄັນຂອງການດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ; ເຂົ້າໃຈກ່ຽວກັບເນື້ອໃນຕ້ອງກຳແໜ້ນໃນການດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ ແລະ ເປັນເຈົ້າການນຳເອົາມະຕິກອງປະຊຸມ ໄປຈັດຕັ້ງຜັນຂະຫຍາຍ ໃຫ້ເກີດຜົນເປັນຈິງ; ບົນພື້ນຖານຄວາມຮັບຮູ້, ເຂົ້າໃຈດັ່ງກ່າວ ເພື່ອເປັນການປັບປຸງພາຍໃນພັກ ໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນຮັບປະກັນການກໍ່ສ້າງພັກຕາມ 5 ຫຼັກການ ແລະ 3 ທິດນຳຂອງພັກ, ຖືກຕ້ອງຕາມກົດລະບຽບພັກ; ເພື່ອຄັດເລືອກບຸກຄະລາກອນ ທີ່ມີມາດຕະຖານ, ເງື່ອນໄຂຕາມທີ່ກຳນົດໄວ້ ປະກອບເຂົ້າໃນການຈັດຕັ້ງແຕ່ລະຂັ້ນໃນລະບົບການເມືອງ ເພື່ອບຸກທະລຸການສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງ ວຽກງານພະນັກງານຂອງຂະແໜງການ, ທ້ອງຖິ່ນ, ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່ແລະເພື່ອສ້າງຄວາມເຊື່ອໝັ້ນ, ສັດທາຂອງມະຫາຊົນຕໍ່ການນຳພາຂອງຄະນະພັກແຕ່ລະຂັ້ນ ກໍຄືພະນັກງານ, ສະມາຊິກພັກ.

ເອກະສານທີ່ນຳມາເຊື່ອມຊຶມຄັ້ງນີ້ ມີ 4 ເນື້ອໃນເອກະສານຄື: ຄວາມເຂົ້າໃຈກ່ຽວກັບການດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ; ສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກ; ຕັ້ງໜ້າເຝິກຝົນຫຼໍ່ຫຼອມຄຸນທາດການເມືອງ ແລະຄຸນສົມບັດສິນທຳປະຕິວັດ ແລະ ເດັດດ່ຽວແກ້ໄຂປາກົດການຫຍໍ້ທໍ້ໃນຖັນແຖວພະນັກງານ ແລະ ສະມາຊິກ.

ໃນຕອນທ້າຍ, ປະທານກອງປະຊຸມໄດ້ຍົກໃຫ້ເຫັນຄວາມສຳຄັນໃນການເຊື່ອມຊຶມເອກະສານໃນຄັ້ງນີ້ ກໍເພື່ອໂຄສະນາເຜີຍແຜ່ໃຫ້ສະມາຊິກພັກ, ພະນັກງານຫຼັກແຫຼ່ງ ໄດ້ຮັບຮູ້ ແລະ ເຂົ້າໃຈເຖິງຄວາມໝາຍຄວາມສຳຄັນຂອງກອງປະຊຸມໃຫຍ່ 3 ຂັ້ນ ແນໃສ່ເພື່ອສ້າງຄວາມຕື່ນຕົວ, ເປັນເຈົ້າການເຂົ້າຮ່ວມໃນການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນ, ໃຫ້ດຳເນີນໄປດ້ວຍຄວາມເປັນລະບຽບຮຽບຮ້ອຍ ແລະ ມີຜົນສຳເລັດຢ່າງຈົບງາມ.

**(ບຸລາຕີ ແສນທະວົງ)**

# ສພຂ ຄຳມ່ວນ ປາຖະກະຖາວັນສ້າງຕັ້ງກຳລັງປ້ອງກັນ ຄວາມສະຫງົບ ແລະ ວັນກຳມະກອນສາກົນ



(ສພຊ) - ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ໄດ້ຈັດພິທີປາຖະກະຖາເລົ່າຄືນມູນເຊື້ອວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ຄົບຮອບ 63 ປີ (5 ເມສາ 1961-5 ເມສາ 2024) ແລະ ວັນກຳມະກອນສາກົນ ຄົບຮອບ 138 ປີ (1 ພຶດສະພາ 1886-1 ພຶດສະພາ 2024) ໃນວັນທີ 30 ເມສາ 2024 ທີ່ຫ້ອງປະຊຸມ ສພຂ ຄຳມ່ວນ ໂດຍການເປັນປະທານຂອງທ່ານນາງບົງອອນ ໄຊຍະສິດ ຮອງປະທານ ສພຂ ຄຳມ່ວນ; ເຂົ້າຮ່ວມມີບັນດາທ່ານຄະນະປະຈຳ ສພຂ, ຄະນະກຳມະການ ສພຂ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫຼອດຮອດສະມາຊິກພັກ-ພະນັກງານ ສພຂ ເຂົ້າຮ່ວມ.

ໂອກາດດັ່ງກ່າວ, ທ່ານນາງ ບົງອອນ ໄຊຍະສິດ ໄດ້ເລົ່າຄືນການກຳເນີດເຕີບໃຫຍ່ຂະຫຍາຍຕົວຂອງກຳລັງປ້ອງກັນຄວາມສະຫງົບ ຕະຫຼອດໄລຍະ 63 ປີ ທີ່ຜ່ານມາ ເຊິ່ງເປັນວັນປະຫວັດສາດທີ່ສຳຄັນຢ່າງຍິ່ງຂອງຊາດ-ຂອງພັກ ເວົ້າລວມເວົ້າສະເພາະກໍແມ່ນວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ນັບແຕ່ໄດ້ຮັບການສ້າງຕັ້ງຂຶ້ນ, ກຳລັງປ້ອງກັນຄວາມສະຫງົບແມ່ນໄດ້ປະກອບສ່ວນຜົນງານຢ່າງໃຫຍ່ຫຼວງໃນພາລະກິດປົດປ່ອຍຊາດ, ເປັນກຳລັງປະຈັນບານປະເຊີນໜ້າໂດຍກົງ, ເປັນກຳລັງທີ່ມີມູນເຊື້ອກໍ່ສ້າງຮາກຖານການເມືອງ ຕິດພັນ ແລະ ສະໜິດແໜ້ນກັບປະຊາຊົນ, ປ້ອງກັນຜູ້ນຳພັກ-ລັດ ຢ່າງເດັດດ່ຽວ ນາຍ ແລະ ພົນຕຳຫຼວດທຸກຮຸ່ນໃນແຕ່ລະໄລຍະໄດ້ກາຍເປັນກຳລັງທີ່ຈົ່ງຮັກພັກດີຕໍ່ປະເທດຊາດ ແລະ ປະຊາຊົນບັນດາເຜົ່າ, ເປັນກຳລັງທີ່ຢູ່ໃຕ້ການຊີ້ນຳ-ນຳພາຢ່າງເດັດຂາດ, ໂດຍກົງ, ຮອບດ້ານຂອງພັກປະຊາຊົນ ປະຕິວັດລາວ ທີ່ມີກຽດສະຫງ່າງາມ, ໄດ້ອຸທິດເລືອດເນື້ອ, ເຫື່ອແຮງເພື່ອຄວາມສະຫງົບສຸກຂອງປະຊາຊົນລາວບັນດາເຜົ່າຕະຫຼອດມາ. ພາຍຫຼັງທີ່ປະເທດຊາດໄດ້ຮັບການປົດປ່ອຍຢ່າງເປັນທາງການ ໃນວັນທີ 2 ທັນວາ 1975 ເປັນຕົ້ນມາ ເຊິ່ງແມ່ນຢູ່ໃນໄລຍະປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ; ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງສະພາບການໃໝ່, ກຳລັງປ້ອງກັນຄວາມສະຫງົບ ກໍໄດ້ປັບປຸງຢ່າງຮອບດ້ານຢູ່ຂັ້ນຮາກຖານ ໄດ້ຈັດຕັ້ງແນວຮົບປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ຂັ້ນທ້ອງຖິ່ນຢ່າງແໜ້ນໜາ, ປັບປຸງຍົກສູງຄຸນນະພາບຂອງບັນດາກຳລັງປະກອບອາວຸດປະຊາຊົນ, ເດັດດ່ຽວທັບມ້າງທຸກກົນອຸບາຍການເຄື່ອນໄຫວມ້າງເພທຳລາຍຂອງສັດຕູ ແລະ ປົກປັກຮັກສາປະເທດຊາດໄດ້ຢ່າງໝັ້ນຄົງ ພ້ອມທັງມີຜົນງານຫຼາຍດ້ານຈົນມາຮອດປັດຈຸບັນ.

ທ່ານ ບຸນສະຫວ່າງ ສີສຸກຂະລາດ ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໄດ້ຂຶ້ນຜ່ານບົດມູນເຊື້ອວັນສ້າງຕັ້ງກຳມະກອນສາກົນ ຄົບຮອບ 138 ປີ ເພື່ອເປັນການທວນຄືນມູນເຊື້ອປະຫວັດຄວາມເປັນມາຂອງວັນກຳມະກອນສາກົນ, ການເຕີບໃຫຍ່ຂະຫຍາຍຕົວຂອງຂະບວນການກຳມະກອນສາກົນ, ຕິດພັນກັບການເຕີບໃຫຍ່ຂະຫຍາຍຕົວຂອງຊົນຊັ້ນກຳມະກອນລາວ ຜົນງານການປະກອບສ່ວນ ປົກປັກຮັກສາ ແລະ ພັດທະນາປະເທດຊາດຂອງຊົນຊັ້ນກຳມະກອນລາວ ແນໃສ່ເພີ່ມທະວີການສຶກສາອົບຮົມໃຫ້ພະນັກງານ, ສະມາຊິກກຳມະບານ, ກຳມະກອນ ໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງເຖິງນໍ້າໃຈຮັກຊາດ, ນໍ້າໃຈຕໍ່ສູ້ອັນອົງອາດກ້າຫານຂອງຊົນຊັ້ນກຳມະກອນ. ໃນປີ 1886 ຢູ່ຕົວເມືອງຊິກາໂກ ປະເທດສະຫະລັດອາເມລິກາ ໄດ້ມີຂະບວນການຕໍ່ສູ້ຂອງກຳມະກອນຫຼາຍພັນຄົນຮຽກຮ້ອງໃຫ້ພວກນາຍທຶນ ຕ້ອງປະຕິບັດຕາມການສະເໜີຂອງກຳມະກອນວ່າ: ແຕ່ມື້ນີ້ຕໍ່ໄປບໍ່ໃຫ້ກຳມະກອນຜູ້ໃດເຮັດວຽກເກີນ 8 ຊົ່ວໂມງ ແມ່ນພັກຜ່ອນ ແລະ ອີກ 8 ຊົ່ວໂມງຮໍ່າຮຽນ; ຕໍ່ໜ້າສະພາບການຄືແນວນັ້ນ ວັນທີ 1 ພຶດສະພາ 1886 ກອງປະຊຸມພັກກອມມູນິດສາກົນ ຄັ້ງທີ 2 ໄດ້ໄຂຂຶ້ນຢູ່ນະຄອນຫຼວງປາຣີ ປະເທດຝຣັ່ງ ທີ່ປະຊຸມໄດ້ຜ່ານໂຄງການດຳເນີນງານສຳຄັນຄື: ຊົນຊັ້ນກຳມະກອນສາມັກຄີຕໍ່ສູ້ເພື່ອປະຕິບັດຄຳຂວັນ ມື້ໜຶ່ງເຮັດວຽກ 8 ຊົ່ວໂມງ, ນັບແຕ່ນັ້ນມາ ຈຶ່ງໄດ້ກຳນົດເອົາວັນທີ 1 ພຶດສະພາ ເປັນວັນກຳມະກອນສາກົນແລະໄດ້ກາຍເປັນວັນບຸນໃຫຍ່ຂອງຊົນຊັ້ນກຳມະກອນໃນທົ່ວໂລກ ຈາກເຫດການຂອງວັນທີ 1 ພຶດສະພາ 1886 ມັນໄດ້ສ້າງກະແສຟອງອັນໃຫຍ່ຫຼວງ ແລະ ແຂງແຮງເຖິງຂະບວນການກຳມະກອນຢູ່ທະວີບເອີຣົບແລະອາເມລິກາ ເປັນກຳລັງໃຈໃຫ້ຂະບວນການຕໍ່ສູ້ຂອງກຳມະກອນ ທັງເປັນບາດກ້າວແຫ່ງໄຊຊະນະ ເປັນວັນທີ່ມີຄວາມໝາຍສຳຄັນອັນໃຫຍ່ຫຼວງ ຂອງຊົນຊັ້ນກຳມະກອນໃນທົ່ວໂລກ ໃນຂະບວນຕໍ່ສູ້ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ.

ຕອນທ້າຍຂອງພິທີ, ທ່ານ ນາງ ບົງອອນ ໄຊຍະສິດ ກໍໄດ້ມີຄຳເຫັນໂອ້ລົມ ແລະ ໃຫ້ທິດ ທ່ານຍັງຮຽກຮ້ອງໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນທີ່ເຂົ້າຮ່ວມໄດ້ເຊື່ອມຊຶມເຂົ້າໃຈເຖິງມູນເຊື້ອນໍ້າໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນລາວ ແນໃສ່ສ້າງຄວາມສາມັກຄີເປັນປຶກແຜ່ນ, ມີສະຕິລະວັງຕົວຕໍ່ກົນອຸບາຍມ້າງເພທຳລາຍຂອງສັດຕູ ເພື່ອເປັນເຈົ້າການເຂົ້າຮ່ວມໃນການປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທັງເພື່ອນຳເອົາແນວທາງ ແລະ ຮໍ່າຮຽນເອົາແບບຢ່າງຄຸນສົມບັດສິນທຳປະຕິວັດຄຸນງາມຄວາມດີ ບັນດາຜູ້ນຳຮຸ່ນກ່ອນມາໝູນໃຊ້ເຂົ້າໃນຊີວິດ, ໜ້າທີ່ວຽກງານຂອງຕົນ ໃຫ້ໄດ້ຮັບປະສິດທິພາບສູງ ແລະ ຈົ່ງສາມັກຄີກັນຢ່າງແໜ້ນແຟ້ນ, ຕັ້ງໜ້າເຝິກຝົນຫຼໍ່ຫຼອມຕົນເອງໃຫ້ມີລະບຽບວິໄນ ໃນການອອກແຮງງານ, ເສີມຂະຫຍາຍຄຸນລັກສະນະອັນດີເລີດ, ທາດແທ້ ແລະ ມູນເຊື້ອອັນດີງາມຂອງຊົນຊັ້ນກຳມະກອນລາວ ເອົາໃຈໃສ່ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ສູງຂຶ້ນເລື້ອຍໆ ເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາ ໃນປັດຈຸບັນ, ປະກອບສ່ວນຢ່າງຕັ້ງໜ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ນັບມື້ນັບເຂັ້ມແຂງຂຶ້ນເລື້ອຍໆ.

**(ເອື້ອ ມະໂນສີງ)**



## ຮອງປະທານ...

(ຕໍ່ຈາກໜ້າ 1)

ກອງປະຊຸມຂຶ້ນໃນວັນທີ 23 ເມສາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ໂດຍການເຂົ້າຮ່ວມຂອງທ່ານສຸກສຳລານ ໄຊຍະແສງ ຮອງປະທານ ສພຂ, ບັນດາທ່ານຄະນະປະຈຳ ສພຂ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 17, ຄະນະກຳມະການແລະຄະນະເລຂາທິການ ສພຂ ພ້ອມດ້ວຍຕາງໜ້າຈາກພະແນກການ ແລະ ອົງການທຽບເທົ່າ, ກອງບັນຊາການ ປກສ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ໃນກອງປະຊຸມ, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ໄດ້ກ່າວວ່າ: ການໂຄສະນາເຜີຍແຜ່ລັດຖະທຳມະນູນ ແລະ ກົດໝາຍ ແມ່ນວຽກທີ່ສຳຄັນອັນໜຶ່ງໃນວຽກງານການສ້າງລັດທີ່ປົກຄອງດ້ວຍກົດໝາຍເຊິ່ງພັກເຮົາໄດ້ມີແນວທາງນະໂຍບາຍວ່າດ້ວຍການສ້າງລັດທີ່ປົກຄອງດ້ວຍກົດໝາຍ ມາແຕ່ກອງປະຊຸມໃຫຍ່ ຄັ້ງທີ VIII ເປັນຕົ້ນມາ, ລັດກໍໄດ້ມີແຜນແມ່ບົດຫຼືແຜນຍຸດທະສາດວ່າດ້ວຍການສ້າງລັດທີ່ປົກຄອງດ້ວຍກົດໝາຍ ນັບແຕ່ປີ 2010 ແລະ ໄດ້ສ້າງໃຫ້ມີກົດໝາຍທີ່ເປັນລະບົບຄົບຊຸດຮັດກຸມ ສອດຄ່ອງແທດເໝາະກັບໜ້າທີ່ການເມືອງຂອງພັກ, ສະພາບການຕົວຈິງພາຍໃນປະເທດ ແລະ ສາກົນ ໃນແຕ່ລະໄລຍະ; ມາຮອດປັດຈຸບັນ, ລັດໄດ້ປະກາດໃຊ້ກົດໝາຍທັງໝົດ 167 ສະບັບ ສະນັ້ນ, ຕ້ອງໄດ້ໂຄສະນາເຜີຍລັດຖະທຳມະນູນ ແລະ ກົດໝາຍ ເພື່ອສ້າງຄວາມຮັບຮູ້ ແລະ ສະຕິເຄົາລົບ ແລະ ປະຕິບັດກົດໝາຍໃນທົ່ວສັງຄົມໃຫ້ສູງຂຶ້ນ, ຈັດຕັ້ງປະຕິບັດກົດໝາຍ ຫຼື ບັງຄັບປະຕິບັດກົດໝາຍຂອງລັດ, ຂອງລະບອບການເມືອງ ໃຫ້ສັກສິດ ແລະ ເຂັ້ມງວດ.

ກອງປະຊຸມໄດ້ຮັບຟັງການລາຍງານຂອງພະແນກຍຸຕິທຳ ກ່ຽວກັບການຈັດຕັ້ງປະຕິບັດວຽກງານການໂຄສະນາເຜີຍແຜ່ລັດຖະທຳມະນູນ ແລະ ກົດໝາຍ ຢູ່ແຂວງອັດຕະປື ແລະ ໄດ້ພ້ອມກັນຄົ້ນຄວ້າປະກອບຄວາມຄິດຄວາມເຫັນ ແລະ ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ຢ່າງກົງໄປກົງມາ, ມີເຫດມີຜົນ, ພາວະວິໄສ ແລະ ແທດກັບສະພາບການຕົວຈິງໃນການຂະຫຍາຍຕົວຂອງສະພາບເສດຖະກິດ-ສັງຄົມໃນປັດຈຸບັນ ເພື່ອຈະໄດ້ພ້ອມກັນຕັ້ງໜ້າຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ ເພື່ອເປັນການຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍ ໃຫ້ເປັນຮູບປະທຳຂຶ້ນເທື່ອລະກ້າວ; ນອກຈາກນີ້, ຍັງໄດ້ຮັບຟັງການເຜີຍແຜ່ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍໃນທົ່ວປະເທດ.

ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ໄດ້ມີຄຳເຫັນ ແລະ ສະເໜີເນັ້ນຕື່ມບາງບັນຫາເປັນຕົ້ນແມ່ນ ເອົາໃຈໃສ່ຊີ້ນຳບັນດາຂະແໜງການ ເພີ່ມທະວີການໂຄສະນາເຜີຍແຜ່ລັດຖະທຳມະນູນ ແລະ ບັນດາກົດໝາຍທີ່ໄດ້ປະກາດໃຊ້ແລ້ວ ໃຫ້ມີຄວາມວ່ອງໄວ, ຕໍ່ເນື່ອງ, ທັນກຳນົດເວລາ, ກວ້າງຂວາງ ແລະ ເຂົ້າເຖິງທຸກເປົ້າໝາຍ ທັງພາກລັດ, ເອກະຊົນ, ປະຊາຊົນລາວບັນດາເຜົ່າດ້ວຍຫຼາຍຮູບການ, ຫຼາຍວິທີການ; ພິຈາລະນາຈັດສັນງົບປະມານ, ພາຫະນະ ສະໜອງໃຫ້ແກ່ວຽກງານດັ່ງກ່າວຕາມຄວາມສາມາດ. ສືບຕໍ່ຊີ້ນຳການຜັນຂະຫຍາຍຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 01/ຄປຈ, ລົງວັນທີ 03 ມັງກອນ 2024 ວ່າດ້ວຍການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ; ສືບ ຕໍ່ຈັດຕັ້ງປະຕິບັດມະຕິຂອງຄະນະປະຈຳສະພາແຫ່ງຊາດສະບັບເລກທີ 29/ຄປຈ, ລົງວັນທີ 07 ກຸມພາ 2022 ແລະນິຕິກຳຂອງລັດຖະບານ ກ່ຽວກັບການໂຄສະນາເຜີຍແຜ່ລັດຖະທຳມະນູນ, ກົດໝາຍແລະນິຕິກຳໃຕ້ກົດໝາຍ. ຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານໂຄສະນາເຜີຍແຜ່ລັດຖະທຳມະນູນ ແລະ ກົດໝາຍ ກໍຄືນິຕິກຳໃຕ້ກົດໝາຍ ລວມທັງນິຕິກຳໃຕ້ກົດໝາຍຂອງແຂວງໃຫ້ແທດເຖິງຕົວຈິງ ໂດຍສະເພາະນິຕິກຳທີ່ຕິດພັນກັບການອະນຸຍາດບັນດາໂຄງການຕ່າງໆ.

ໂອກາດນີ້, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຍັງໄດ້ມອບຄອມພິວເຕີ (ໂນດບຸກ) ຈຳນວນ 2 ໜ່ວຍ ມູນຄ່າ 20 ລ້ານກີບ ໃຫ້ແກ່ ສພຂ ເພື່ອນຳໃຊ້ເຂົ້າໃນວຽກງານວິຊາສະເພາະ ໂດຍການກ່າວຮັບຂອງທ່ານສຸກສຳລານ ໄຊຍະແສງ.

ໃນຕອນບ່າຍຂອງວັນດຽວກັນ, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ, ທ່ານ ສຸກສຳລານ ໄຊຍະແສງ ພ້ອມດ້ວຍຄະນະ ແລະ ພາກສ່ວນກ່ຽວຂ້ອງໄດ້ເຄື່ອນໄຫວຢ້ຽມຢາມບໍລິສັດຫາໂກ ອາກຣີ ຕັ້ງຢູ່ບ້ານຫາດຊຸ້ນ ເມືອງໄຊເສດຖາ ເພື່ອຢ້ຽມຢາມ ແລະຮັບຟັງການລາຍງານການຈັດຕັ້ງປະຕິບັດຂອງໂຄງການ ເຊິ່ງເປັນບໍລິສັດໃຫຍ່ ມີການລົງ ທຶນຫຼາຍໃນຂະແໜງກະສິກຳປູກຢາງພາລາ, ປູກກ້ວຍ ແລະ ລ້ຽງງົວພັນຊີ້ນ.

**(ວິນັດ ສີສຸລາດ)**

ທະນາຄານພັດທະນາລາວ
LDB Bank




# ບັນຫາແກ້ຍາກ ຂອງສັດທາ ແລະ ປັນຍາ

# ດົ້ນກົບເມກ

ເຖິງແມ່ນວ່າໄດ້ຂຽນຊີ້ແຈງຫຼາຍບົດຜ່ານມາ ເລື່ອງສັດທາໃນພຸດທະສາສະໜາ ທີ່ພະພຸດທະເຈົ້າເນັ້ນສອນໃຫ້ມີປັນຍາປະກອບຄູ່ກັນໄປນຳຄືດັ່ງເງົາຕາມໂຕຂອງຄົນ ບໍ່ພຽງແຕ່ທໍ່ນັ້ນ ພະພຸດທະເຈົ້າກໍເນັ້ນໃຫ້ສາວົກສອນເລື່ອງປັນຍາຄູ່ກັບສັດທາໃຫ້ປະຊາຊົນໄດ້ເກີດຄວາມຮູ້-ຄວາມເຂົ້າໃຈຖືກຕ້ອງຫຼັກການດຳເນີນຊີວິດ ເພາະຖ້າຄົນເຮົາມີແຕ່ສັດທາ ຄືຄວາມເຊື່ອຢ່າງດຽວ ກໍບໍ່ຕ່າງກັບຄົນທີ່ມີແຕ່ຫູຟັງ ແຕ່ຕາບອດ ເພາະຂາດປັນຍາເບິ່ງທາງແຍກແຍະວ່າອັນໃດມີເຫດຜົນພຽງພໍເຊື່ອຖືໄດ້ ແລະ ມີຫຼັກຖານປະກອບໜ້າເຊື່ອຖື.

ຜູ້ຂຽນໄດ້ຕິດຕາມເບິ່ງເຫັນຂ່າວ-ສື່ອອນລາຍ ທີ່ປົວຢູ່ເທິງເຟສບຸກ-ອິນເຕີເນັດ ຫຼື ໜ້າເພສ ໜ້າຈໍໂທລະສັບຂອງຫຼາຍແຫຼ່ງທີ່ມາ ປາກົດມີບາງຄົນ ບາງກະແສກໍຣີຣາຜະຫວາປົກ ສວຍໂອກາດເຊີດຊູພະຍານາກ ຫຼື ອະດີດຊາດພົບຕ່າງໆ ກ່ຽວຂ້ອງກັບການຄົ້ນພົບພະພຸດທະຮູບຢູ່ເມືອງຕົ້ນເຜິ້ງ ແຂວງບໍ່ແກ້ວ ເຊິ່ງຢ່າລືມວ່າບາງຄົນ ຫາວິທີນຳສະເໜີໂຕເອງ ໂດຍອີງໃສ່ຂໍ້ມູນພຽງແຕ່ສັດທາເພີ້ຝັນ ເປັນຂະບວນການຄວາມເຊື່ອກັບຄົນອ້ອມຂ້າງປະເທດລາວ ເຊິ່ງພາໃຫ້ສັງຄົມສັບສົນ ແລະ ວຸ້ນວາຍ ພາໃຫ້ເກີດສິງຄາມນ້ຳລາຍ.

ຜູ້ອ້າງບາງຄົນກໍບອກຢືນຢັນເຊື່ອຢ່າງດຽວວ່າ ອະພິນິຫານ ພະຍານາກ ຫຼື ອະດີດຊາດຂອງຕົນ ເປັນຜູ້ນັ້ນຜູ້ນີ້ສຳຄັນໃນໜ້າປະຫວັດສາດ ຜູ້ຂຽນຍົກມາແລກປ່ຽນວ່າ ໜ່ວຍງານກ່ຽວຂ້ອງຄວນຕິດຕາມເບິ່ງ ເພື່ອບໍ່ໃຫ້ສັງຄົມສັບສົນ ບໍ່ຄວນປ່ອຍໃຫ້ສັງຄົມ ເປັນສັງຄົມພຽງແຕ່ສັດທາ ແຕ່ຄວນສ້າງສັງຄົມແຫ່ງປັນຍາດີກວ່າ, ນຳໃຊ້ວັດຖຸປະຫວັດສາດ-ບູຮານຄະດີ-ສິລະປະ ທີ່ມີຫຼັກຖານສາກົນຊີ້ຊັດແຈ້ງເຊື່ອຖືຕັດສິນໄດ້ ດັ່ງນັ້ນ ລະຫວ່າງສັດທາ ແລະ ປັນຍານີ້ ເຮົາຈະເອົາສັດທາຢ່າງດຽວ ຫຼື ຕ້ອງການປັນຍາໄປນຳ, ບໍ່ຄວນຟັງແຕ່ເລື່ອງເລົ່າ ຕຳນານ ຈາກຜູ້ເກາະກະແສຫາປະໂຫຍດກໍເປັນໄປໄດ້, ສັງຄົມສັບສົນ ພາໃຫ້ເກີດຄວາມເສຍຫາຍທັງພາບພົດ ແລະ ກຽດສັກສີແກ່ສ່ວນລວມ.






# ຕາຝັ່ງ – ແຄມຝັ່ງ – ຣິມຝັ່ງ

'ຕາຝັ່ງ' ເປັນຄຳປະສົມປະເພດຄຳນາມ ປະກອບດ້ວຍຄຳວ່າ 'ຕາ' ທີ່ແຜງສຽງມາຈາກ 'ທ່າ' ໝາຍເຖິງ "ຝັ່ງນ້ຳສຳລັບຂຶ້ນລົງ" ແລະ 'ຝັ່ງ' ໝາຍເຖິງ "ດິນຢູ່ຣິມນ້ຳ". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ 'ຕາຝັ່ງ' ກໍໝາຍເຖິງ "ດິນບ່ອນຣິມຫຼືແຄມນ້ຳທີ່ຊັນ" ເຊັ່ນ

- ຕາຝັ່ງແມ່ນ້ຳຂອງ ຖືກກະແສນ້ຳເຊາະເຈື່ອນ.
- ນະຄອນຫຼວງວຽງຈັນ ເລັ່ງກໍ່ສ້າງໂຄງການປ້ອງກັນຕາຝັ່ງເຈື່ອນ.
- ລົດກະບະພວມຈະເລັ່ງອອກຈາກເຮືອບັກຂຶ້ນຄ້ອຍຕາຝັ່ງ ແຕ່ຈັກລົດມອດກ່ອນຈຶ່ງໄຫຼຕົກນ້ຳ.

'ແຄມຝັ່ງ' ເປັນຄຳປະສົມປະເພດຄຳນາມ ປະກອບດ້ວຍຄຳວ່າ 'ແຄມ' ໝາຍເຖິງ "ຣິມ, ຂອບ" ແລະ 'ຝັ່ງ' ໝາຍເຖິງ "ດິນຢູ່ຣິມນ້ຳ". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ 'ແຄມຝັ່ງ' ກໍໝາຍເຖິງ "ດິນບ່ອນຣິມ ນ້ຳ" ເຊັ່ນ

- ລາວຢືນຢູ່ແຄມຝັ່ງແມ່ນ້ຳຂອງ.
- ນະແຄມຝັ່ງເຊວັນແຫ່ງນັ້ນເອີຍ ຂ້ານີ້ເຄີຍໄດ້ຢູ່ຄູ່ອາໄສ...
(ສອງວັກຕົ້ນຂອງເພງ "ແຄມຝັ່ງເຊວັນ")
- ລົດຊະບິນຕັ້ງຢູ່ທິດຕາເວັນຕົກຂອງປະເທດປັອກຕຸຍການ ແຄມຝັ່ງມະຫາສະໝຸດອັດລັງຕິກຂອງແຫຼມອີເບລີ.

'ຣິມຝັ່ງ' ເປັນຄຳປະສົມປະເພດຄຳນາມປະກອບດ້ວຍຄຳວ່າ 'ຣິມ' ໝາຍເຖິງ "ແຄມສຸດ, ຂອບ" ແລະ 'ຝັ່ງ' ໝາຍເຖິງ "ດິນຢູ່ຣິມນ້ຳ". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ 'ຣິມຝັ່ງ' ກໍໝາຍເຖິງ "ດິນບ່ອນແຄມສຸດ ຂອງນ້ຳ" ເຊັ່ນ

- ຄອຍນາງທີ່ຣິມຝັ່ງເຊກອງ.
- ປະຊາຊົນດຳລົງຊີວິດຢູ່ຕາມຣິມຝັ່ງເຊ.
- ເຮືອນຂອງລາວຕັ້ງຢູ່ໃກ້ຣິມຝັ່ງນ້ຳຂອງ.
- ຣິມຝັ່ງດອນໂຂງ ລືມບໍ່ລົງດອນໂຂງດອກເຈົ້າ (ວັກຕົ້ນຂອງເພງ "ຣິມຝັ່ງດອນໂຂງ)




# ວິທີເຮັດວຽກ

**ພາກທີ 5**
**ບັນຫາວິທີເຮັດວຽກ**

ພະນັກງານເຂດລົງໄປແຂວງ, ພະນັກງານແຂວງລົງໄປເມືອງ, ພະນັກງານເມືອງລົງໄປບ້ານ, ກໍທຳທ່າອ່ອງຕ່ອງຄືອາດຍາ. ເວລາເປີດກອງປະຊຸມ, ແມ່ນຈະເປີດ 100 ເທື່ອ 1.000 ເທື່ອ ກໍເວົ້າຄືນແນວເກົ່າ: ສະຖານະການຂອງໂລກ, ສະຖານະການຂອງອິນດູຈີນ, ຖົກຖຽງຕຳໜິ, ປິດກອງປະຊຸມ "ອາດຍາພະນັກງານ" ຊີ້ແຈງເຖິງ 2-3 ຊົ່ວໂມງ, ເວົ້າເຖິງສິ່ງໃດທີ່ກວ້າງໄກ, ແຕ່ສ່ວນວຽກການຕົວຈິງໃນເຂດ, ໃນແຂວງ, ໃນເມືອງ, ໃນບ້ານທີ່ກ່ຽວຂ້ອງນັ້ນເລີຍບໍ່ເວົ້າເຖິງ. "ໃນເວລາອາດຍາພະນັກງານ" ພວມເວົ້າຢູ່ນັ້ນຜູ້ນັ່ງຟັງບາງຄົນກໍຫາວນອນ ບາງຄົນກໍຄວຍນອນ, ຜູ້ໃດກໍຄອງໃຫ້ເພິ່ນເຊົາເພື່ອຈະໄດ້ເມືອບ້ານໄວ, ບໍ່ມີໃຜເຂົ້າໃຈຫຍັງໝົດ, ດັ່ງນັ້ນ ຈະເອົາອັນໃດມາຖົກຖຽງກັນ? ເພາະສະນັ້ນ ປະຊາຊົນຈຶ່ງຢ້ານແຕ່ເພິ່ນເປີດກອງປະຊຸມ ແຕ່ລະເທື່ອທີ່ເຂົາເຈົ້າຈຳເປັນຕ້ອງໄປປະຊຸມ ກໍບໍ່ຕ່າງຫຍັງກັບຖືກບັງຄັບໄປເປັນກູລີເມື່ອກ່ອນນີ້, ນັ້ນກໍແມ່ນເປັນຍ້ອນພະຍາດຫ່າງໄກຈາກປະຊາຊົນ, ພະຍາດມັກຮູບນອກ, ເປີດກອງປະຊຸມໃຫ້ເປັນພິທີ, ໃຫ້ເພິ່ນເຫັນວ່າຕົນໄດ້ເປີດກອງປະຊຸມ, ບໍ່ແມ່ນເປີດກອງປະຊຸມເພື່ອຜົນປະໂຫຍດຂອງປະຊາຊົນ.

ອ່ານຕໍ່ສະບັບໜ້າ...



# ຂຽນຄຳລາວໃຫ້ຖືກ

# ຄູແສງ

| ຖືກ | ຜິດ |
|---|---|
| ຮັບຜິດຊອບ | ຮັບພິດຊອບ |
| ຢາພິດ | ຢາຜິດ |
| ຈົ່ງແນ່ນຂ້ອຍໜືນ | ຈົ່ງແນ່ນຂ້ອຍມືນ |
| ສັກຢາມືນ | ສັກຢາໜືນ |
| ຊັດເຈນ | ສັດເຈນ |
| ສັດຈະ | ຊັດຈະ |
| ສຳລັບເຈົ້າ | ສຳຫຼັບເຈົ້າ |
| ສະຫຼັບກັນ | ສະລັບກັນ |
| ສະລົມ | ຊະລົມ |
| ຊະຊາຍ | ສະຊາຍ |



ສຸກສະບາຍທາຍໂລດ

# ຄຸນປະໂຫຍດຂອງໃບເຕີຍ

ໂດຍ: ທີວກທີ



ເຊື່ອວ່າຫຼາຍຄົນຮູ້ຈັກ ໃບເຕີຍ ພືດສີຂຽວທີ່ໃຫ້ກິ່ນຫອມ, ມີເອກະລັກສະເພາະ ແລະ ເປັນພືດທີ່ພົບເຫັນຫຼາຍຢູ່ຕາມບ້ານເຮືອນ ແລະ ຍັງເປັນພືດທີ່ປູກງ່າຍນຳອີກ. ໃບເຕີຍ ບໍ່ພຽງແຕ່ສາມາດນຳມາປະກອບປຸງແຕ່ງອາຫານໄດ້ແຕ່ຫາກຍັງເປັນສະໝຸນໄພນຳອີກ ເຊິ່ງຄຸນປະໂຫຍດຂອງໃບເຕີຍນັ້ນປະກອບດ້ວຍ 7 ຢ່າງລຸ່ມນີ້:

1. ບັນເທົາໂຣກເຈັບຂໍ້ ແລະ ຂໍ້ອັກເສບ ເນື່ອງຈາກໃບເຕີຍມີລົດເຢັນ ຈຶ່ງສາມາດບັນເທົາອາການປວດ-ເຈັບຂໍ້ ແລະ ກະດູກໄດ້ ເຊິ່ງວິທີແມ່ນນຳໃບເຕີຍສົດ 3-4 ໃບມາບົດ ແລ້ວປະສົມນ້ຳມັນໝາກພ້າວເລັກນ້ອຍ ໃຊ້ເປັນຢາທາພາຍນອກ;

2. ປິ່ນປົວໂຣກເບົາຫວານ ໃຊ້ຮາກໃບເຕີຍ ປະມານ 1 ກຳມື ຕົ້ມເຮັດເປັນນ້ຳດື່ມທຸກໆເຊົ້າ-ແລງ ຈະຊ່ວຍຫຼຸດລະດັບນ້ຳຕານໃນເລືອດ ແລະ ຂັບຖ່າຍປັດສະວະໄດ້ດີ;

3. ບຳລຸງປະສາດ ການດື່ມນ້ຳໃບເຕີຍຈະຊ່ວຍບຳລຸງກຳລັງ ແລະ ລະບົບປະສາດ ເຮັດໃຫ້ຮູ້ສຶກສົດຊື່ນ ແລະ ແກ້ອາການອ່ອນເພຍນຳອີກ;

4. ບຳລຸງຫົວໃຈ ດື່ມນ້ຳໃບເຕີຍທຸກໆເຊົ້າ-ແລງ ຈະຊ່ວຍບຳລຸງຫົວໃຈ ແລະ ຫຼອດເລືອດ ລວມທັງຊ່ວຍປັບລະດັບຄວາມດັນໃຫ້ຢູ່ໃນເກນປົກກະຕິ;

5. ຕ້ານໂຣກຜິວໜັງບາງຊະນິດ ໃບເຕີຍຍັງເປັນສະໝຸນໄພຂ້າເຊື້ອໂຣກແລະໄວຣັດຜິວໜັງ ພຽງແຕ່ນຳໃບເຕີຍມາຕຳ ແລ້ວນຳໄປທາໃສ່ຜິວໜັງບໍລິເວນດັ່ງກ່າວ;

6. ໃຊ້ພອກໜ້າໃຫ້ຜິວກະຈ່າງໃສ ນຳໃບເຕີຍມາລ້າງນ້ຳ ແລະ ປັ່ນໃຫ້ລະອຽດ ຈາກນັ້ນ, ນຳມາພອກຜິວໜັງເພື່ອເຮັດໃຫ້ຜິວໜັງຜ່ອງໃສ ແລະ ຊຸ່ມຊື່ນ;

7. ຕ້ານລັງແຄ ນຳໃບເຕີຍ 2-5 ໃບ ຕາກແດດໃຫ້ແຫ້ງ ແລ້ວນຳມາບົດລະອຽດເປັນຜົງຄືແປ້ງ ຈາກນັ້ນ, ນຳມານວດ (ສະຫົວ) ເປັນປະຈຳ ຈະຊ່ວຍຫຼຸດລັງແຄໄດ້.

ແຫຼ່ງຂໍ້ມູນ: ໂຕະນ້ຳຊາ

ອາດກະວີລາວ

## ຄ່າຂອງກຳມະກອນ

# ແກ້ວຕາວັນ

❊ ຕຶກຫຼັງສູງສຽດຟ້າ
ສີຂາວແດງແກມເຫຼືອງ
ແມ່ນສີມືຂອງອ້າຍ
ເປັນຄົນມາກໍ່ສ້າງ

ຫຼາຍຍ່ານມຸມເມືອງ
ສະຫງ່າງາມຍາມຈ້ອງ
ຊາຍເປັນຄົນແຕ່ງ
ແປງໃຫ້ຈຶ່ງງາມ

❊ ບໍ່ແມ່ນຄົນຢູ່ຫ້ອງ
ບໍ່ແມ່ນຄົນຂາຍຂອງ
ບໍ່ແມ່ນລັດຖະກອນຄົນຜູ້
ແຕ່ແມ່ນກຳມະກອນຢ່າງອ້າຍ

ແອນັ່ງເຢັນສະບາຍ
ຢູ່ຕາມໂຮງຮ້ານ
ເງິນເດືອນສູງສິ່ງ
ຊາຍນີ້ທີ່ທຳ

❊ ເຮືອນຫຼັງງາມທີ່ນ້ອງ
ມີເຫື່ອໄຄຂອງຊາຍ
ສີຈຶ່ງເງົາງາມເຫຼື້ອມ
ຄັນຂາດຄົນຢ່າງອ້າຍ

ນາງຢູ່ອາໄສ
ຢາດປືນເປດ້ອຍ
ທາງໃນດູອາດ
ໃຜແທ້ທີ່ຈະທຳ

❊ ນ້ອງເອີຍນາງຢ່າໄດ້
ເກີງຫົວຕີນປາຍນອນ
ແຕ່ວ່າເຮືອນຂອງເຈົ້າ
ບໍ່ແມ່ນແຝນພ່ອມນ້ອງ

ລັງກຽດກຳມະກອນ
ບໍ່ມີຄືນ້ອງ
ຊາຍເປັນຄົນກໍ່
ແປງໃຫ້ນາຄທະແພງ

❊ ຢ່າສຳແດງວ່າເວົ້າ
ຫາກວ່າເຮືອນນາງເພ
ມີລື ຄົນລອຍຈະມາສ້າງ
ຄັນບໍ່ແມ່ນກຳມະກອນຢ່າງອ້າຍ

ເອົາປຽບກຳມະກອນ ຫຼາຍເນີ!
ຜຸ່ຍພັງທະລາຍມ້າງ
ເຮືອນນາງຄືນໃໝ່
ມາສ້າງເພື່ອນາງ



ພັກພາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສາວຈົ້ມ

❊ **ອັບ**ກຳມະກອນສາກົນ **1 ພຶດສະພາ**ຫາກໍ່ຜ່ານພົ້ນໄປ ແລະ ສະແດງຄວາມຊົມເຊີຍທີ່ໄດ້ເຫັນພິທີຈັດກິດຈະກຳສະເຫຼີມສະຫຼອງວັນດັ່ງກ່າວຢ່າງຄຶກຄື້ນມ່ວນຊື່ນ ເພື່ອສະແດງເຖິງຄວາມ**ຮູ້ບຸນຄຸນ** ແລະ ຂອບໃຈ**ຕໍ່ບັນພະບຸລຸດກຳມະກອນ**ທີ່ບຳພາຍາດໄດ້ **ປະຊາທິປະໄຕເຕັມສ່ວນ** ມອບປະຊາທົ່ວດ້າວ ຈະເລີນກ້າວລື່ນຫຼັງ ຊົມດັ່ງຄ່ຳກ່າວຍ້ອງ ເຊີງຊ່າລືຊາ ວ່າເປັນກະດູກສັນຫຼັງ ກໍ່ແປງເມືອງບ້ານ ໃຫ້ປະເທດຊາດນັ້ນ ຈະເລີນເຮືອງຮຸ່ງ ພັດທະນາ ດຸ່ງກ້າວ ມີສິດເທົ້າທຽມກັບ **ນັ້ນແລ້ວ!**

❊ **ໄລ**ຍະນີ້ເຫັນວ່າ **ສະພາບອາກາດຮ້ອນເອົ້າ** ແລະ ມີຂ່າວແຈ້ງເຕືອນ**ພໍ່ແມ່ພີ່ນ້ອງປະຊາຊົນບັນດາເຜົ່າ**ໃຫ້ເຝົ້າ**ລະວັງພາຍຸລະດູຮ້ອນ** ພ້ອມທັງຮັກສາສຸຂະພາບໃຫ້ດີ ແລະ ບາງກໍ່ລະນີ ກໍ່ໃຫ້**ເກີດລະກຳກາງແລ້ງ** ເພີ່ນຍັງຖະແຫຼງອີກວ່າ ໃຫ້ບາງໂຮງຮຽນພິຈາລະນາໂຈະການຮຽນການສອນບາງມື້ ຫຼືບາງຕອນທີ່ເຫັນວ່າອຸນຫະພູມສູງເຖິງ **40 ອົງສາເຊຂຶ້ນໄປ** ແລ້ວຈຶ່ງໃຫ້ທັນມາສອນທົດແທນຄືນເວລາພັກດັ່ງກ່າວ **ຊົມເຊີຍ!** ຊ່າວເດັ່ນເຫັນໂຈ່ງແຈ້ງຄວາມເປັນຫ່ວງເປັນໄຍ ຈົ່ງໃສ່ໃຈປະຕິບັດ ພໍ່າຕິດຕາມໃກ້ ຊິດໃສ່ໃຈໃນເລື້ອງ ອຸນຫະພູມແປປ່ຽນ **ຈົ່ງຮັກສາສຸຂະພາບ**ໃຫ້ ແຂງແຮງເລື້ອຍຕະຫຼອດໄປ **ທ່ານເອີຍ!**

ຊອບຍິ້ມ

# ແອ່ບຕຸ້ງ

### ເລື່ອງ: ຄວາມໃນໃຈຂອງນັກຂຽນ

ທິດເຈິດ ແລະ ຊຽງແອ່ນ ສອງສ່ຽວລົມກັນ

**ທິດເຈີດ:** ເປັນນັກຂຽນມາສິບປາຍປີ ບໍ່ເຄີຍມີຜົນງານມາ ໃຜສົນໃຈຜົນງານກູ ມານີ້ ມີຄົນອ່ານຢ່າງໃຈຈົດໃຈຈໍ່

**ຊຽງແອ່ນ:** ມຶງຂຽນນິຍາຍເລື່ອງໃໝ່ຫວາ?

**ທິດເຈີດ:** ບໍ່ ກູຂຽນລາຍການອາຫານ ແລະ ເຄື່ອງດື່ມ ເພາະກູເປີດຮ້ານໃໝ່

**ຊຽງແອ່ນ:** !!!

ຄະຕິເຕືອນໃຈ

# ດອກຫຍ້າ

ຢ່າສຸຄຸຍອວດອ້າງ | ຕົນເກ່ງເກີນໃຜ
ລາງເທື່ອຫຼາຍຄົນເຂົາ | ເກ່ງເກີນຫຼາຍເທົ້າ
ເຮົາວ່າເຮົາກະດັກ | ເຂົາພັດແຮງກະດໍ້
ເຮົາວ່າບົ່ງຢ່ອງຢໍ້ | ເຂົາຊ້ຳພັດບົ່ງຕໍ່ໄດ່ເດີ



ລັດຖະສະພາຕ່າງປະເທດ

# ສະພາເຢຍລະມັນ ຜ່ານກົດໝາຍໃຫ້ປ່ຽນເພດໄດ້ງ່າຍຂຶ້ນ

ລັດຖະສະພາເຢຍລະມັນ ອະນຸມັດກົດໝາຍວ່າດ້ວຍການກໍານົດຕົນເອງ (Self-Determination Act) ທີ່ຈະເຮັດໃຫ້ປະຊາຊົນປ່ຽນເພດຕາມກົດໝາຍໄດ້ງ່າຍຂຶ້ນ.

ສໍານັກຂ່າວ AFP ລາຍງານຈາກນະຄອນຫຼວງແບກແລງ, ປະເທດເຢຍລະມັນ ໃນວັນທີ 13 ເມສາ 2024 ວ່າ: ພາຍໃຕ້ກົດໝາຍສະບັບໃໝ່ ຊາວເຢຍລະມັນຈະສາມາດປ່ຽນເພດສະພາບຂອງພວກເຂົາຕາມກົດໝາຍດ້ວຍການຍື່ນຄໍາຮ້ອງກັບຫ້ອງການທະບຽນທ້ອງຖິ່ນ ໂດຍບໍ່ຕ້ອງໃຫ້ເຫດຜົນ ຫຼື ຂໍ້ມູນທາງການແພດໃດໆ.

ສໍາລັບເດັກທີ່ມີອາຍຸຕໍ່າວ່າ 14 ປີ, ຜູ້ປົກຄອງຈະຕ້ອງເປັນຜູ້ຍື່ນຄໍາຮ້ອງ; ສ່ວນເດັກທີ່ມີອາຍຸ 14 ປີຂຶ້ນໄປ, ສາມາດດໍາເນີນການດ້ວຍຕົນເອງໄດ້ ແຕ່ພວກເຂົາຕ້ອງໄດ້ຮັບຄວາມຍິນຍອມຈາກຜູ້ປົກຄອງເທົ່ານັ້ນ. ເຍົາວະຊົນໃນທັງສອງກໍລະນີຕ້ອງໄດ້ຮັບການປຶກສາຫາລືເຊັ່ນດຽວກັນ.

ທ່ານ ໂອລາຟ ໂຊລຊ໌ (Olaf Scholz) ນາຍົກລັດຖະມົນຕີເຢຍລະມັນ ກ່າວວ່າ: ກົດໝາຍສະບັບໃໝ່ນີ້ ສະແດງໃຫ້ເຫັນເຖິງຄວາມເຄົາລົບຕໍ່ຄົນຂ້າມເພດ (transgender), ຄົນທີ່ມີເພດທີ່ບໍ່ຈະແຈ້ງ (intersex) ແລະ ຄົນທີ່ບໍ່ລະບຸວ່າເປັນເພດຊາຍ ຫຼື ຍິງ (nonbinary) ໂດຍບໍ່ເອົາສິ່ງໃດໄປຈາກຜູ້ອື່ນ.

ການປ່ຽນແປງດັ່ງກ່າວເຮັດໃຫ້ເຢຍລະມັນປະຕິບັດຕາມປະເທດແບນຊິກ, ແອັດສະປາຍ, ອຽກລັງ, ລຸກຊໍາບວກແລະດານມາກ ໃນການຜ່ານກົດໝາຍທີ່ຊ່ວຍໃຫ້ປະຊາຊົນສາມາດປ່ຽນເພດຂອງພວກເຂົາຕາມກົດໝາຍໄດ້ງ່າຍຂຶ້ນ.

ເຖິງແມ່ນວ່າກົດໝາຍສະບັບໃໝ່ຈະບໍ່ໄດ້ຈໍາກັດຄວາມຖີ່ໃນການປ່ຽນເພດສະພາບຕາມກົດໝາຍ, ແຕ່ການປ່ຽນເພດຈະໃຊ້ເວລາສາມເດືອນຈຶ່ງຈະມີຜົນ ແລະຜູ້ທີ່ຮ້ອງຂໍດໍາເນີນການຈະບໍ່ອະນຸຍາດໃຫ້ມີການປ່ຽນເພດເພີ່ມຕື່ມອີກ 1 ປີ; ນອກຈາກນີ້, ກົດໝາຍຍັງລວມມີການລົງໂທດສໍາລັບໃຜກໍຕາມທີ່ເປີດເຜີຍຄົນຂ້າມເພດໂດຍບໍ່ໄດ້ຮັບອະນຸຍາດ.



# ລັດຖະສະພາເອີຣົບ ຮັບຮອງເອົາຂໍ້ຕົກລົງການອົບພະຍົບ ແລະ ການລີ້ໄພສະບັບໃໝ່



ຕາມເວັບໄຊຂ່າວສານຊິນຮວາ, ເມື່ອວັນພຸດທີ 10 ເມສາ 2024 ລັດຖະສະພາເອີຣົບໄດ້ຮັບຮອງເອົາຂໍ້ຕົກລົງວ່າດ້ວຍການອົບພະຍົບ ແລະ ການລີ້ໄພສະບັບໃໝ່ ທີ່ຈະຮັດແໜ້ນຂະບວນການທາງຊາຍແດນ ແລະ ຮຽກຮ້ອງໃຫ້ບັນດາປະເທດສະມາຊິກຂອງສະຫະພາບເອີຣົບ (ອີຢູ) ແບ່ງປັນຄວາມຮັບຜິດຊອບ.

ລັດຖະສະພາປະກາດໃນຖະແຫຼງການວ່າ: ການຮັບຮອງເອົາຂໍ້ຕົກລົງດັ່ງກ່າວ ມີຈຸດປະສົງເພື່ອແກ້ໄຂການອົບພະຍົບເຂົ້າເອີຣົບຢ່າງຜິດປົກກະຕິ, ເພີ່ມທະວີການປົກປັກຮັກສາເຂດຊາຍແດນພາຍນອກຂອງອີຢູ ແລະ ປະຕິຮູບລະ ບົບການລີ້ໄພຂອງເອີຣົບ.

ອີງຕາມຂໍ້ຕົກລົງສະບັບໃໝ່, ຜູ້ອົບພະຍົບທີ່ບໍ່ມີເງື່ອນໄຂເຂົ້າໄປໃນສະຫະພາບເອີຣົບຈະຕ້ອງຜ່ານຂະບວນການຄັດເລືອກກ່ອນເຂົ້າປະເທດ ໃນນັ້ນມີການລະບຸຕົວຕົນ, ການເກັບກໍາຂໍ້ມູນຊີວະວິທະຍາ (biometric), ແລະການກວດສຸຂະພາບ ແລະ ຄວາມປອດໄພ.

ການຮຽກຮ້ອງຂໍລີ້ໄພຈະຖືກກວດສອບໄວຂຶ້ນ ລວມທັງຢູ່ເຂດຊາຍແດນຂອງອີຢູ ແລະ ການສົ່ງຕົວກັບຄືນປະເທດທີ່ມີປະສິດທິຜົນຫຼາຍຂຶ້ນ. ປະເທດສະມາຊິກຍັງຈະຕ້ອງເລືອກລະຫວ່າງການຮັບຜິດຊອບສໍາລັບຜູ້ຂໍລີ້ໄພ, ການປະກອບສ່ວນທາງດ້ານການເງິນ ຫຼື ການສະໜອງການສະໜັບສະໜູນດ້ານການດໍາເນີນງານ.

"ພວກເຮົາຕ້ອງເປັນຜູ້ຕັດສິນໃຈວ່າໃຜຈະເຂົ້າມາໃນສະຫະພາບເອີຣົບ ແລະ ພາຍໃຕ້ສະຖານະການການໃດ, ບໍ່ແມ່ນຜູ້ລັກລອບຂົນຄົນເຂົ້າເມືອງ ແລະ ພວກຄ້າມະນຸດ" ທ່ານ ນາງ ອີວຊູລາຟອນແດເລເຢນ(Ursula von der Leyen) ປະທານຄະນະກໍາມະການເອີຣົບ ກ່າວໃນຖະແຫຼງການສະບັບໜຶ່ງວ່າພ້ອມທັງຊົມເຊີຍການຮັບຮອງເອົາຂໍ້ຕົກລົງດັ່ງກ່າວ.

ລັດຖະສະພາກ່າວວ່າ, ເມື່ອຂໍ້ຕົກລົງດັ່ງກ່າວໄດ້ຮັບການຮັບຮອງຈາກສະພາມົນຕີສະຫະພາບເອີຣົບ (EU Council) ຢ່າງເປັນທາງການ, ກົດໝາຍຈະມີຜົນບັງຄັບໃຊ້ຫຼັງຈາກການພິມເຜີຍແຜ່ ແລະ ຄາດວ່າບັນດາປະເທດສະມາຊິກຈະເລີ່ມນໍາໃຊ້ບັນດາລະບຽບການດັ່ງກ່າວພາຍໃນໄລຍະເວລາ 2 ປີຕໍ່ໜ້າ.

ອົງການປ້ອງກັນຊາຍແດນ ແລະ ຊາຍຝັ່ງຂອງເອີຣົບ (Frontex) ກ່າວໃນກາງເດືອນມັງກອນຜ່ານມາວ່າ: ປີຜ່ານມາ, ມີການກວດພົບການຂ້າມຊາຍແດນທີ່ຜິດປົກກະຕິປະມານ 380.000 ຄັ້ງ ຢູ່ຕາມຊາຍແດນພາຍນອກຂອງອີຢູເຊິ່ງເພີ່ມຂຶ້ນ 17 ເປີເຊັນຈາກປີກ່ອນໜ້າ ແລະ ເປັນຍອດລວມປະຈໍາປີທີ່ສູງທີ່ສຸດນັບແຕ່ປີ 2016.

# ຊູດັງໃຕ້ ເລີ່ມກະກຽມການເລືອກຕັ້ງທົ່ວໄປໃນເດືອນທັນວາ

ສາທາລະນະລັດຊູດັງໃຕ້ໄດ້ປະກາດໃນວັນອັງຄານທີ 09 ເມສາ 2024 ວ່າ ຈະເລີ່ມກະກຽມສໍາລັບການເລືອກຕັ້ງລັດຖະສະພາທີ່ກໍານົດໄວ້ໃນເດືອນທັນວາ, ເຊິ່ງເປັນການເລືອກຕັ້ງຄັ້ງທໍາອິດຂອງປະເທດອາຟຣິກາຕາເວັນອອກແຫ່ງນີ້ ນັບແຕ່ໄດ້ຮັບເອກະລາດ.

ພາຍຫຼັງໄດ້ຮັບເອກະລາດໃນປີ 2011 ແລະ ສົງຄາມກາງເມືອງໄດ້ສິ້ນສຸດລົງໃນປີ 2018, ໃນເບື້ອງຕົ້ນ ຊູດັງໃຕ້ມີກໍານົດທີ່ຈະຈັດການເລືອກຕັ້ງກ່ອນເດືອນກຸມພາ 2023; ເຖິງແນວໃດກໍຕາມ, ລັດຖະບານໄລຍະຂ້າມຜ່ານ (transitional government) ແລະ ຝ່າຍຄ້ານໄດ້ຕົກລົງທີ່ຈະເລື່ອນເວລາອອກໄປຈົນຮອດທ້າຍປີ 2024.

ທ່ານ ອາເບດເນໂກ ອາຄ໊ອກ ກາຄູນ (Abednego Akok Kacuol) ປະທານຄະນະກໍາມະການການເລືອກຕັ້ງແຫ່ງຊາດ ກ່າວຕໍ່ນັກຂ່າວໃນນະຄອນຫຼວງຈູບາ (Juba) ວ່າ ພວກເຂົາໄດ້ສົ່ງເຈົ້າໜ້າທີ່ໄປປະຕິບັດງານທົ່ວປະເທດ ແລະ ຍັງໄດ້ຮັບຍານພາຫະນະຈໍານວນໜຶ່ງ ເຊິ່ງເປັນສິ່ງສໍາຄັນສໍາລັບການເຄື່ອນທີ່ໄດ້ງ່າຍ; ທ່ານກ່າວວ່າ ລັດຖະບານໄດ້ຈັດສັນງົບປະມານໃຫ້ແກ່ຄະນະກໍາມະການການເລືອກຕັ້ງ ເພື່ອເລີ່ມດໍາເນີນຂະບວນການດັ່ງກ່າວແລະພວກເຂົາໄດ້ກະກຽມຮ່າງປະຕິທິນທີ່ຈະເລີ່ມລົງທະບຽນຜູ້ມີສິດເລືອກຕັ້ງໃນເດືອນມິຖຸນານີ້, ຖ້າຫາກໄດ້ຮັບອະນຸມັດຈາກພາກສ່ວນກ່ຽວຂ້ອງ.

ທ່ານ ອາຄ໊ອກ ກ່າວວ່າ "ບັນດາກິດຈະກໍາກ່ອນການເລືອກຕັ້ງ ຈະເລີ່ມຕົ້ນຢູ່ສໍານັກງານໃຫຍ່ການເລືອກຕັ້ງໃນຈູບາ ແລະ ຈາກນັ້ນພວກເຮົາຈະໄປທີ່ 10 ລັດ ແລະ 3 ເຂດບໍລິຫານ."

ຕາມທີ່ອົງການສະຫະປະຊາຊາດລະບຸ, ຊູດັງໃຕ້ ມີກໍານົດຈະຈັດການເລືອກຕັ້ງທົ່ວໄປໃນເດືອນທັນວາ ເຊິ່ງເປັນການສິ້ນສຸດຂອງໄລຍະຂ້າມຜ່ານທີ່ເກີດຂຶ້ນພາຍຫຼັງສົງຄາມກາງເມືອງອັນຮຸນແຮງທີ່ເກີດຂຶ້ນບໍ່ດົນຫຼັງຈາກປະເທດໄດ້ຮັບເອກະລາດກ່ຽວກັບຂໍ້ຂັດແຍ່ງທາງການເມືອງລະຫວ່າງປະທານາທິບໍດີຊັນວາ ຄີຣ໌ (Salva Kiir) ແລະ ຮອງປະທານາທິບໍດີຣີກ ມາຊາຣ໌ (RiekMachar) ໃນເວລານັ້ນ, ການປະທະກັນໄດ້ເຮັດໃຫ້ປະຊາຊົນປະມານ 400.000 ຄົນເສຍຊີວິດ.

**ແຫຼ່ງຂ່າວ: ຊິນຮວາ**

# ກົດດີວົວ ຮ່າງກົດໝາຍແຫ່ງຊາດກ່ຽວກັບການປ່ຽນແປງດິນຟ້າອາກາດ

ລັດຖະບານກົດດີວົວ ກໍາລັງສ້າງກົດໝາຍທີ່ມີຈຸດປະສົງເພື່ອຄວບຄຸມການເຄື່ອນໄຫວທັງໝົດກ່ຽວກັບການປ່ຽນແປງດິນຟ້າອາກາດໃນປະເທດ, ຕາມລາຍງານຂອງສໍານັກຂ່າວ Ivorian.

ກະຊວງສິ່ງແວດລ້ອມ, ການພັດທະນາແບບຍືນຍົງ ແລະການຫັນປ່ຽນລະບົບນິເວດ ພວມຮ່າງເນື້ອໃນ "ເຊິ່ງຄໍານຶງເຖິງຄວາມຄິດເຫັນຂອງທຸກພາກສ່ວນກ່ຽວຂ້ອງກັບບັນຫາດັ່ງກ່າວໃນລະດັບຊາດ," ທ່ານ ຢາວ ມາກແຊນ (Yao Marcel) ຜູ້ອໍານວຍການການຮ່ວມມືສາກົນ ແລະ ການລະດົມທຶນ ປະຈໍາກະຊວງດັ່ງກ່າວ ກ່າວໃນວັນຈັນທີ 15 ເມສາ 2024 ທີ່ອາບິດຈານ (Abidjan) ເມືອງທີ່ໃຫຍ່ທີ່ສຸດ ແລະ ເປັນນະຄອນຫຼວງເກົ່າຂອງກົດດີວົວ.

ຮ່າງກົດໝາຍດັ່ງກ່າວໄດ້ຮັບການສະຫຼຸບໃນທາງປະຕິບັດແລ້ວ ແລະ ຈະນໍາສະເໜີໃນປີນີ້ເພື່ອໃຫ້ຄະນະລັດຖະມົນຕີຮັບຮອງເອົາ ກ່ອນຈະນໍາເຂົ້າລັດຖະສະພາ; ເມື່ອໄດ້ຮັບການຮັບຮອງແລ້ວ, ກົດໝາຍດັ່ງກ່າວຈະສ້າງຕັ້ງຄະນະກໍາມະການລະຫວ່າງກະຊວງລະດັບຊາດ ແລະ ອົງການດິນຟ້າອາກາດແຫ່ງຊາດ, ເພື່ອ "ປະສານງານການເຄື່ອນໄຫວດ້ານດິນຟ້າອາກາດທັງໝົດໃນລະດັບຊາດ ເພື່ອສົມທົບກັນສ້າງຄວາມພະຍາຍາມ ແລະ ເຮັດໃຫ້ພົນໄດ້ຮັບມີຄວາມຍືນຍົງ," ຕາມການລະບຸຂອງທ່ານ ຢາວ.

ທ່ານກ່າວເສີມວ່າ: ການຮັບຮອງເອົາບັນດາລະບຽບການ ແລະ ກົດໝາຍ ຈະເປັນບາດກ້າວທີ່ສໍາຄັນໃນຄວາມພະຍາຍາມເພື່ອບັນລຸເປົ້າໝາຍດິນຟ້າອາກາດແຫ່ງຊາດ; ນອກຈາກນີ້, ຍັງສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນທີ່ເປັນຮູບປະທໍາຂອງປະເທດຕໍ່ອະນາຄົດທີ່ຍືນຍົງ.

**ແຫຼ່ງຂ່າວ: ຊິນຮວາ**

# ຊູແອດ ຜ່ານກົດໝາຍຫຼຸດອາຍຸເພື່ອປ່ຽນເພດ



*ລັດຖະສະພາຊູແອດ ຜ່ານກົດໝາຍເພື່ອຫຼຸດອາຍຸຂັ້ນຕ່ຳສຳລັບການປ່ຽນເພດຢ່າງຖືກກົດໝາຍ ຈາກ 18 ເປັນ 16 ປີ ແລະ ເຮັດໃຫ້ການເຂົ້າເຖິງການຜ່າຕັດແປງເພດ ເປັນເລື່ອງງ່າຍຂຶ້ນ.*

ສຳນັກຂ່າວ AP ລາຍງານຈາກນະຄອນຫຼວງສະຕົກໂຮມ, ປະເທດຊູແອດ ເມື່ອວັນທີ 18 ເມສາ 2024 ວ່າ: ລັດຖະສະພາຊູແອດ ໄດ້ມີມະຕິດ້ວຍຄະແນນສຽງ 234 ຕໍ່ 94 (ບໍ່ເຂົ້າຮ່ວມປະຊຸມ 21 ທ່ານ) ຮັບຮອງເອົາກົດໝາຍສະບັບດັ່ງກ່າວ, ຫຼັງຈາກການອະພິປາຍທີ່ແກ່ຍາວເປັນເວລາເກືອບ 6 ຊົ່ວໂມງ.

ນອກຈາກການຫຼຸດອາຍຸຂັ້ນຕ່ຳສຳລັບການແປງເພດ, ກົດໝາຍໃໝ່ນີ້ ຍັງມີຈຸດປະສົງເພື່ອເຮັດໃຫ້ບຸກຄົນສາມາດປ່ຽນເພດຢ່າງຖືກຕ້ອງຕາມກົດໝາຍໄດ້ງ່າຍຂຶ້ນອີກດ້ວຍ ຈາກກ່ອນໜ້ານີ້ ຂະບວນການອາດໃຊ້ເວລາເຖິງ 7 ປີ.

ທັງນີ້, ກົດໝາຍໃໝ່ທັງ 2 ສະບັບໄດ້ແກ່ ກົດໝາຍວ່າດ້ວຍການຄວບຄຸມຂັ້ນຕອນການຜ່າຕັດແປງເພດ ແລະ ກົດໝາຍວ່າດ້ວຍການຄວບຄຸມຂັ້ນຕອນການດຳເນີນການໃນການປ່ຽນເພດຢ່າງຖືກກົດໝາຍໃນທະບຽນຢ່າງເປັນທາງການ ຈະມີຜົນບັງຄັບໃຊ້ໃນວັນທີ 01 ກໍລະກົດ 2025.

ເຖິງແມ່ນວ່າເຍົາວະຊົນຊາວຊູແອດ ຈະສາມາດປ່ຽນເພດໄດ້ຕາມກົດໝາຍຕັ້ງແຕ່ອາຍຸ 16 ປີ; ແຕ່ຕາບໃດທີ່ພວກເຂົາຍັງມີອາຍຸຕ່ຳກວ່າ 18 ປີ ຈຳເປັນຕ້ອງໄດ້ຮັບການອະນຸມັດຈາກພໍ່ແມ່ ຫຼື ຜູ້ປົກຄອງ, ທ່ານໝໍ, ແລະ ຄະນະກຳມະການສຸຂະພາບ ແລະ ສະຫວັດດີການແຫ່ງຊາດ. ນອກຈາກນີ້, ການຜ່າຕັດເພື່ອເອົາຮວຍໄຂ່ (ovary) ຫຼື ໄຂ່ຫຳ (testis) ອອກນັ້ນ ຈະໄດ້ຮັບອະນຸຍາດເມື່ອພວກເຂົາມີອາຍຸ 23 ປີຂຶ້ນໄປ, ອີງຕາມກົດໝາຍເກົ່າ.

# ສະພາຕ່ຳ ສ.ເຊັກ ລົງຄະແນນສຽງເຫັນດີ ເຮັດໃຫ້ກົດໝາຍການຂົ່ມຂືນເຄັ່ງຄັດຂຶ້ນ

*ສະພາຜູ້ແທນປະຊາຊົນຂອງສາທາລະນະລັດເຊັກ ມີມະຕິເຮັດໃຫ້ກົດໝາຍວ່າດ້ວຍການຂົ່ມຂືນເຄັ່ງຄັດຂຶ້ນ ພ້ອມກັບຄຳນິຍາມທີ່ເຂັ້ມງວດຍິ່ງຂຶ້ນ ໂດຍຈັດປະເພດໃຫ້ການລ່ວງລະເມີດທາງເພດທຸກຮູບແບບຂອງເດັກອາຍຸຕ່ຳກວ່າ 12 ປີ ຖືເປັນການຂົ່ມຂືນ ຫຼື ການທຳຮ້າຍຮ່າງກາຍ.*

ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງປຣາກ, ສາທາລະນະລັດເຊັກເມື່ອວັນທີ 11 ເມສາຜ່ານມາວ່າ: ຮ່າງກົດໝາຍດັ່ງກ່າວ ປ່ຽນຄຳນິຍາມຂອງການຂົ່ມຂືນ ຈາກການບັງຄັບໃຫ້ມີເພດສຳພັນເປັນ"ການມີເພດສຳພັນໂດຍບໍ່ໄດ້ຮັບການຍິນຍອມ" ເຊິ່ງສາມາດສະແດງອອກໄດ້ດ້ວຍທ່າທາງ ຫຼື ຮ້ອງໄຫ້; ນອກຈາກນັ້ນ, ກົດໝາຍສະບັບປັບປຸງ ຍັງໃຫ້ການປົກປ້ອງຜູ້ເຄາະຮ້າຍທີ່ບໍ່ສາມາດຂັດຂືນໄດ້ເນື່ອງຈາກການເຈັບປ່ວຍ, ການມຶນເມົາເຄື່ອງດື່ມທີ່ມີທາດເຫຼົ້າ, ການນອນຫຼັບ ຫຼື ການຖືກກັກຂັງ ເຊັ່ນດຽວກັນກັບການລະບຸການກະທຳຜິດຂອງການລ່ວງລະເມີດທາງເພດສຳລັບການກະທຳທີ່ບໍ່ກ່ຽວຂ້ອງກັບການຮ່ວມເພດ.

ສະພາຜູ້ແທນປະຊາຊົນ (ສະພາຕ່ຳ) ສ.ເຊັກ ຊີ້ວ່າ, 16 ປະເທດໃນທະວີບເອີຣົບ ຫາກໍປ່ຽນຄຳນິຍາມທາງກົດໝາຍຂອງການຂົ່ມຂືນ ເມື່ອບໍ່ດົນມານີ້ເຊັ່ນກັນ.

ຂະນະທີ່ປະເທດເອີຣົບອື່ນໆ ເຊັ່ນ: ຝຣັ່ງ, ອີຕາລີ ແລະ ໂປໂລຍ ໃຊ້ຄຳນິຍາມຂອງການຂົ່ມຂືນແບບດັ້ງເດີມ ໂດຍອີງໃສ່ຄວາມຮຸນແຮງ ຫຼື ການຂົ່ມຂູ່.

ເຖິງແມ່ນວ່າການປັບປຸງກົດໝາຍວ່າດ້ວຍການຂົ່ມຂືນຂອງສາທາລະນະລັດເຊັກ ໄດ້ຖືກຮັບຮອງໂດຍສະມາຊິກສະພາຜູ້ແທນປະຊາຊົນທັງໝົດ, ແນວໃດກໍຕາມ, ຮ່າງກົດໝາຍຂ້າງເທິງຕ້ອງໄດ້ຮັບການຮັບຮອງຈາກສະພາສູງ ແລະ ລົງນາມໂດຍປະທານາທິບໍດີຈຶ່ງຈະມີຜົນບັງຄັບໃຊ້.



# ອັງໂດລາ ຜ່ານກົດໝາຍກຳນົດເງື່ອນໄຂ ດ້ານພາສາສຳລັບຄົນເຂົ້າເມືອງ



*ລັດຖະສະພາອັງໂດລາ ມີມະຕິຜ່ານກົດໝາຍທີ່ກຳນົດເງື່ອນໄຂຂັ້ນຕ່ຳກ່ຽວກັບພາສາກາຕາລັນ (Catalan) ສຳລັບຜູ້ອາໄສທີ່ເປັນຊາວຕ່າງຊາດ.*

ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງອັງໂດລາ ລາ ເວນລາ (Andorra la Vella), ປະເທດອັງໂດລາ ໃນວັນທີ 26ເມສາຜ່ານມາວ່າ: ກົດໝາຍວ່າດ້ວຍກຳນົດເງື່ອນໄຂດ້ານພາສາ ຜ່ານມະຕິດ້ວຍຄະແນນສຽງ 25 ຕໍ່ 3, ມີຈຸດປະສົງເພື່ອສະໜັບສະໜູນຈຸດຢືນຂອງ "ພາສາກາຕາລັນ" ເຊິ່ງເປັນພາສາທາງການໃນອັງໂດລາ, ປະເທດທີ່ມີເນື້ອທີ່ 468 ກິໂລຕາແມັດ ຕັ້ງຢູ່ລະຫວ່າງປະເທດຝຣັ່ງ ແລະ ແອັດສະປາຍ, ຫຼັງຈາກການໃຊ້ພາສາກາຕາລັນໃນປະເທດຫຼຸດລົງໃນຊຸມປີທີ່ຜ່ານມາ.

ເຖິງແມ່ນວ່າປະຊາຊົນອັງໂດລາ ມີຈຳນວນປະມານເຄິ່ງໜຶ່ງຂອງປະຊາກອນ 80.000 ຄົນໃນປະເທດ, ແຕ່ມີຊາວແອັດສະປາຍປະມານ 25.000 ຄົນ ແລະແຮງງານຂ້າມຊາດຊາວອາເມລິກາລາຕິນຈຳນວນຫຼາຍເຮັດໃຫ້ແອັດສະປາໂຍນ ກາຍເປັນພາສາທີ່ໃຊ້ໃນຊີວິດປະຈຳວັນສຳລັບຄົນສ່ວນໃຫຍ່.

ຊາວຕ່າງຊາດໃນອັງໂດລາ ປະມານ 3.000 ຄົນ ທີ່ຕ້ອງຕໍ່ອາຍຸໃບອະນຸຍາດທີ່ຢູ່ອາໄສຂອງພວກເຂົາໃນປີນີ້ຕ້ອງສອບເສັງພາສາ ເຊິ່ງຜູ້ທີ່ບໍ່ຜ່ານການສອບເສັງ ຈະຕ້ອງເຂົ້າຮຽນຫຼັກສູດພາສາກາຕາລັນ30ຊົ່ວໂມງ ຢູ່ສູນບໍລິການຂອງລັດ.

ກົດໝາຍໃໝ່ຍັງອະນຸຍາດໃຫ້ມີການປັບໃໝເງິນ ໃນບາງກໍລະນີທີ່ທຸລະກິດ ຫຼື ສະຖາບັນບາງແຫ່ງບໍ່ມີການໃຊ້ພາສາກາຕາລັນ.

# ພັກກຳອຳນາດຍີ່ປຸ່ນ ພ່າຍແພ້ ການເລືອກຕັ້ງແທນໃນສາມເຂດ

*ສະຖານະການພາຍໃນພັກລັດຖະບານຂອງຍີ່ປຸ່ນ ເລີ່ມເຄັ່ງຕຶງຂຶ້ນອີກ ໂດຍສະເພາະຕຳແໜ່ງຫົວໜ້າພັກ ແລະ ນາຍົກລັດຖະມົນຕີ ຈາກຄວາມປະລາໄຊໃນການເລືອກຕັ້ງແທນ 3 ທີ່ນັ່ງສຳຄັນ.*

ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງໂຕກຽວ, ປະເທດຍີ່ປຸ່ນ ໃນວັນທີ 30 ເມສາ 2024 ວ່າ: ຍີ່ປຸ່ນ ໄດ້ຈັດການເລືອກຕັ້ງແທນສະມາຊິກສະພາຜູ້ແທນລາສະດອນ ຫຼື ສະພາຕ່ຳ 3 ທີ່ນັ່ງ ຢູ່ນະຄອນຫຼວງໂຕກຽວ, ແຂວງຊິມາເນະ (Shimane) ແລະ ແຂວງນາງາຊາກິ (Nagasaki) ເມື່ອວັນອາທິດທີ 28 ເມສາຜ່ານມາ ໂດຍຜົນທີ່ບໍ່ເປັນທາງການປາກົດວ່າ ພັກເສລີປະຊາທິປະໄຕ (Liberal Democratic Party-LDP) ຂອງທ່ານນາຍົກລັດຖະມົນຕີ ຟູມິໂອະ ຄິຊິດະ (Fumio Kishida) ພ່າຍແພ້ທັງ 3 ທີ່ນັ່ງ.

ໃນຂະນະທີ່ສື່ມວນຊົນທ້ອງຖິ່ນຫຼາຍສຳນັກ ລວມທັງໜັງສືພິມ ໂຢມິອຸຣິ (Yomiuri) ເຊິ່ງເປັນສື່ອະນຸລັກນິຍົມ ວິເຄາະຄວາມພ່າຍແພ້ໃນການເລືອກຕັ້ງຄັ້ງນີ້ວ່າ "ຄືການເສື່ອມຖອຍ" ຂອງພັກ LDP ແລະ ຈະເປັນການສັ່ນຄອນສະຖຽນລະພາບທາງການເມືອງຂອງທ່ານ ຄິຊິດະ ເນື່ອງຈາກວ່າມັນອາດຈະນຳໄປສູ່ການທີ່ສະມາຊິກພັກບາງກຸ່ມພະຍາຍາມໂຄ່ນລົ້ມທ່ານໃຫ້ສຳເລັດກ່ອນການເລືອກຕັ້ງທົ່ວໄປເຊິ່ງມີກຳນົດຈະຈັດຂຶ້ນໃນເດືອນຕຸລາ 2025, ແຕ່ກ່ອນໜ້ານັ້ນ ພັກມີກຳນົດທີ່ຈະຈັດການເລືອກຕັ້ງພາຍໃນພັກ ເພື່ອຊອກຫາຜູ້ນຳຄົນໃໝ່ໃນເດືອນກັນຍານີ້.



# ເຫັນໄວ້ ໄດ້ບົດຮຽນ

## ແບບຢ່າງທີ່ດີ ໃນການສະຫງວນອາຊີບ

❖ ວິເສດ ສະແຫວງສຶກສາ

ໃນບັນຍາກາດວັນແຮງງານສາກົນ ເຊິ່ງບາງຄົນລຶ້ງເອີ້ນວ່າ ວັນກຳມະກອນສາກົນ ທີ່ພວມຫຍັບຈໍ້ມໍ່ເຂົ້າມານີ້ (1 ພຶດສະພາ), ຜູ້ຂຽນຂໍເກັບເອົາເລື່ອງກ່ຽວກັບນະໂຍບາຍສະຫງວນອາຊີບ ຢູ່ປະເທດມາເລເຊຍ ມາເວົ້າໃຫ້ຟັງ ເພື່ອແຮໄວ້ເປັນບົດຮຽນນຳໃຊ້ໃນເງື່ອນໄຂທີ່ເໝາະສົມກັບບ້ານເຮົາ. ເພາະໃນໂລກປັດຈຸບັນ, ທີ່ເຕັມໄປດ້ວຍການແຂ່ງຂັນນີ້ ຖ້າບໍ່ມີມາດຕະການສະຫງວນອາຊີບໃຫ້ຄົນພາຍໃນປະເທດເຮັດ ໂດຍສະເພາະແລ້ວ ອາຊີບດັ່ງເດີມຫຼາຍສາຂາກໍອາດຖືກຍາດແຍ່ງຈາກຄົນຕ່າງປະເທດທີ່ມີທັກສະ ຫຼື ສີມືດີກວ່າ. ດັ່ງນັ້ນ, ການສະຫງວນອາຊີບ ຕ້ອງຕິດພັນກັບການສົ່ງເສີມ, ພັດທະນາສີມື ຫຼື ຄຸນນະພາບສະເພາະດ້ານ ໃຫ້ຄົນພາຍໃນປະເທດ. ດຽວນີ້ການຍາດແຍ່ງອາຊີບຍັງຖືກຄຸກຄາມດ້ວຍເຕັກໂນໂລຊີລ້ຳຍຸກ ໂດຍສະເພາະແມ່ນປັນຍາປະດິດ (ເອໄອ-AI) ທີ່ພວມເຂົ້າມາເຮັດວຽກແທນມືຄົນໃນຫຼາຍໆສາຂາອາຊີບ. ອັນໄດ້ເຮັດໃຫ້ນະໂຍບາຍສະຫງວນອາຊີບໃນປັດຈຸບັນມີຄວາມຫຍຸ້ງຍາກຂຶ້ນຕື່ມ ຄືນອກຈາກການກຳນົດຫ້າມຄົນຕ່າງປະເທດເຮັດບາງອາຊີບແລ້ວ ຍັງຕ້ອງໄດ້ຂຶ້ນບັນຊີວຽກທີ່ຕ້ອງໄດ້ຫ້າມ AI ເຮັດ ເພາະຈະເຮັດໃຫ້ມະນຸດຕາດຳໆວ່າງງານ! ເມື່ອປະມານ 6 ປີ ຍ້ອນຫຼັງ, ທາງການຂອງປະເທດມາເລເຊຍ ໄດ້ເອົາຈິງເອົາຈັງກັບນະໂຍບາຍສົ່ງເສີມວຽກເຮັດງານທຳ ສຳລັບພົນລະເມືອງພາຍໃນປະເທດ ດ້ວຍມາດຕະການຫຼຸດຜ່ອນໃນການນຳເຂົ້າແຮງງານຕ່າງປະເທດ ໄປຄຽງຄູ່ກັບການກຳນົດວຽກງານ ທີ່ຕ້ອງໄດ້ສະຫງວນໄວ້ໃຫ້ຄົນພາຍໃນເຮັດ. ວຽກທີ່ສະຫງວນນັ້ນຕ້ອງແມ່ນປະເພດທີ່ຄົນພາຍໃນປະເທດມີຄວາມສາມາດເຮັດດ້ວຍຄຸນນະພາບຮັບປະກັນແທ້ໆ, ອັນໃດທີ່ຍັງເຮັດບໍ່ທັນໄດ້ດີ ກໍປ່ອຍໃຫ້ຄົນຕ່າງປະເທດເຮັດຊາມຊາໄປກໍໄດ້. ຂະແໜງວຽກທີ່ທາງການມາເລເຊຍພິຈາລະນາຂຶ້ນບັນຊີເປັນອາຊີບສະຫງວນໃນເວລານັ້ນ ລວມມີວຽກຊ່າງສີມື ເຊັ່ນ: ອາຊີບຕັດຜົມ, ຫຍິບແສ່ວ, ວຽກຫັດຖະກຳ ຕີເງິນ-ຕີຄຳ, ວຽກຊັກເຄື່ອງ ແລະ ອື່ນໆ. ນະໂຍບາຍສະຫງວນອາຊີບທີ່ເວົ້າມານີ້ ເລີ່ມປະຕິບັດມາແຕ່ປີ 2019 ໄປພ້ອມໆກັບການຈຳກັດນຳເຂົ້າແຮງງານຕ່າງປະເທດທີ່ເຄີຍເຮັດວຽກໃນຂະແໜງອາຊີບດັ່ງກ່າວ. ແນວໃດກໍດີ, ໃນເບື້ອງຕົ້ນ ນະໂຍບາຍສະຫງວນອາຊີບນີ້ກໍໄດ້ພົບກັບບັນຫາເລັກນ້ອຍ ໂດຍສະເພາະແມ່ນຂະແໜງແຕ່ງ ແລະ ຕັດຜົມ ເພາະແຕ່ໃດໆມາ ອາຊີບນີ້ແມ່ນຕົກຢູ່ໃນກຳມືຂອງຊ່າງຈາກປະເທດອິນເດຍ ແລະ ຊາວມາເລເຊຍເອງ ກໍມັກສີມືຂອງຊ່າງອິນເດຍ. ການສະຫງວນອາຊີບຕັດ ແລະ ແຕ່ງຜົມ ໄດ້ເຮັດໃຫ້ຮ້ານຕັດຜົມຈຳນວນຫຼວງຫຼາຍປິດປະຕູຍ້ອນຂາດນາຍຊ່າງຈາກອິນເດຍ.

ນະໂຍບາຍສະຫງວນອາຊີບ ທີ່ກ່າວມາຂ້າງເທິງນັ້ນ ເລີ່ມປະຕິບັດເປັນຂັ້ນຕອນໄປ ບໍ່ແມ່ນເຮັດປຸບປັບພ້ອມໆກັນ. ອາຊີບໃດຄົນພາຍໃນຍັງເຮັດບໍ່ທັນໄດ້ດີ ກໍສືບຕໍ່ໃຫ້ຄົນຕ່າງປະເທດເຮັດໄປກ່ອນ ສ່ວນການສະຫງວນອາຊີບແຕ່ງ ແລະ ຕັດຜົມນີ້ ໄດ້ເລີ່ມປະຕິບັດແຕ່ປີ 2021 ເປັນຕົ້ນມາ.

ມີຂ່າວໜ້າສົນໃຈໜຶ່ງທີ່ແຊກຢູ່ໃນນະໂຍບາຍສະຫງວນອາຊີບ ແລະ ການຫຼຸດຜ່ອນການເພິ່ງພາແຮງງານຕ່າງປະເທດ ກໍຄືຄຳເຫັນຂອງທ່ານ ມາຮາເທຍ ໂມຫາມັດ ນາຍົກລັດຖະມົນຕີມາເລເຊຍໃນເວລານັ້ນ ທີ່ໄດ້ອອກມາຮຽກຮ້ອງໃຫ້ຊາວມາເລເຊຍຖິ້ມນິດໄສເລືອກວຽກເຮັດເຊັ່ນ:ຮືວຽກອະນາໄມ,ວຽກກໍ່ສ້າງ, ວຽກທີ່ໄດ້ຕາກແດດທົນຝົນ, ວຽກເປື້ອນເປິ ແລະ ອື່ນໆ. ທ່ານນາຍົກ ມາຮາເທຍ ບອກວ່າ ຖ້າຍັງມີນິດໄສເລືອກວຽກເກີນໄປ ກໍຈະບໍ່ສາມາດສະຫງວນອາຊີບ ແລະ ບໍ່ສາມາດເພິ່ງຕົນເອງດ້ານແຮງງານ.

TE SOLE




## ຄວາມລັບປະຈຳວົງອາຊີບ

*#ບ່າວກະບື*

ໃນລະຫວ່າງທີ່ທ່ານໝໍໜຸ່ມກັບນາງເມຍ ພວມນັ່ງຢູ່ມຸມໜຶ່ງໃນຫ້ອງບັນເທີງ, ກໍພໍດີມີສາວຮູບຮ່າງຍົ້ວຍວນກວນເສັ້ນ ໃນຊຸດຮັດໜຸ່ນ ສົ່ງຮອຍຍິ້ມຫວານໆ ແລະ ຄຳທັກທາຍ ຖາມສະບາຍດີທ່ານໝໍດ້ວຍສຽງລຶ້ງ.

"ອີ່ນັ້ນແມ່ນໃຜ?" ນາງເມຍຖາມທ່ານໝໍດ້ວຍຄວາມສົງໄສ.

"ໂອ່... ນັ້ນແມ່ນນາງສາວທີ່ອ້າຍລຶ້ງທາງອາຊີບຊື່ໆດອກ" ຜົວຕອບ. ນາງເມຍດອດສຽງແຫຼມໆປົນສຽດອອກມາວ່າ:

"ເລື່ອງນັ້ນແນ່ນອນນ້ອຍຮູ້ແລ້ວ... ແຕ່ມັນແມ່ນອາຊີບໃຜແທ້? ອາຊີບເຈົ້າ ຫຼື ອາຊີບອີ່ນັ້ນ ?"

## Professional Secrets

*# BAOKBU*

In a corner of the pub was a young doctor with his wife when a lascivous blonde in a tight-fitting dress smiled sweetly at him and cooed a familiar "Hello!"

"Who was that?" queried the wife suspiciously. "Oh, just a young woman I know professionally." replied the husband.

"I'm sure of that," grunted the wife sarcastically, "But whose profession, yours or hers?"

ຕາມພາສາ ກາຕູນ




● ໂດຍ : ພູຜາ

**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ